ທະນາຄານແຫ່ງ ສປປ ລາວ




# ບົດລາຍງານເສດຖະກິດ 2021

## ສາລະບານ

**ຄຳເຫັນຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ........ 1**
I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ ........ 3
1.1. ຂະແໜງອຸດສາຫະກຳ ........ 3
1.2. ຂະແໜງກະສິກຳ ........ 4
1.3. ຂະແໜງບໍລິການ ........ 5
1.4. ອັດຕາເງິນເຟີ້ ........ 5
II. ຂະແໜງການເງິນຂອງລັດ ........ 6
2.1. ຖານະການເງິນຂອງລັດ ........ 6
2.2. ລາຍຮັບງົບປະມານ ........ 7
2.3. ລາຍຈ່າຍງົບປະມານ ........ 8
2.4. ດຸ່ນດ່ຽງງົບປະມານ ........ 8
III. ຂະແໜງເງິນຕາ-ການເງິນ ........ 9
3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ ........ 9
3.2. ຖານເງິນຕາ ........ 11
3.3. ປະລິມານເງິນ ........ 11
3.4. ອັດຕາດອກເບ້ຍ ........ 12
3.5. ເງິນຝາກ ........ 13
3.6. ສິນເຊື່ອ ........ 14
3.7. ລະບົບສະຖາບັນການເງິນ-ເງິນຕາ ........ 15
IV. ດຸນການຊຳລະກັບຕ່າງປະເທດ ........ 16
4.1. ດຸນການຊຳລະລວມ ........ 16
4.2. ດຸນບັນຊີຊຳລະປົກກະຕິ ........ 18
4.3. ດຸນບັນຊີທຶນ ແລະ ບັນຊີການເງິນ ........ 19
4.4. ໜີ້ສິນຕໍ່ຕ່າງປະເທດຂອງລັດຖະບານ ........ 20
V. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2022 ........ 21
**ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ........ 23**
**ສະພາບໍລິຫານທະນາຄານແຫ່ງ ສປປ ລາວ ........ 24**
**ຄະນະກຳມະການນະໂຍບາຍເງິນຕາ ........ 25**
**ຄະນະກຳມະການກວດກາ ........ 26**
**ບັນດາກົມ ແລະ ກົງຈັກທຽບເທົ່າກົມ ຢູ່ທະນາຄານແຫ່ງ ສປປ ລາວ ........ 27**
**ກົງຈັກການຈັດຕັ້ງຂອງ ທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ........ 28**
**ແຜນວາດ ໂຄງຮ່າງການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ........ 29**

# ສາລະບານຮູບສະແດງ


ຮູບສະແດງ 1. ອັດຕາການຂະຫຍາຍຕົວຂອງເສດຖະກິດ ແຕ່ປີ 2017 – 2021.................................... 3
ຮູບສະແດງ 2. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງອຸດສາຫະກຳ.............................. 4
ຮູບສະແດງ 3. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງກະສິກຳ ........................................ 4
ຮູບສະແດງ 4. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງບໍລິການ...................................... 5
ຮູບສະແດງ 5. ການປະກອບສ່ວນຂອງໝວດສິນຄ້າຕໍ່ອັດຕາເງິນເຟີ້ລວມ ໄລຍະ 5 ປີຜ່ານມາ.................... 6
ຮູບສະແດງ 6. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ6
ຮູບສະແດງ 7. ລາຍຮັບງົບປະມານ ........................................................................................... 7
ຮູບສະແດງ 8. ລາຍຈ່າຍງົບປະມານ.......................................................................................... 8
ຮູບສະແດງ 9. ດຸ່ນດ່ຽງງົບປະມານ.......................................................................................... 8
ຮູບສະແດງ 10. ການປ່ຽນແປງຂອງອັດຕາແລກປ່ຽນ )+( ແຂງຄ່າ ແລະ )-( ອ່ອນຄ່າ............................ 10
ຮູບສະແດງ 11. ໂຄງປະກອບຂອງຖານເງິນຕາ ........................................................................... 11
ຮູບສະແດງ 12. ການຂະຫຍາຍຕົວຂອງປະລິມານເງິນ (M2)........................................................ 12
ຮູບສະແດງ 13. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ ........................... 13
ຮູບສະແດງ 14. ໂຄງປະກອບຂອງເງິນຝາກ ............................................................................. 13
ຮູບສະແດງ 15. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມຂະແໜງການ ........................................ 14
ຮູບສະແດງ 16. ດຸນການຊໍາລະກັບຕ່າງປະເທດ........................................................................ 17
ຮູບສະແດງ 17. ລວມຍອດຄັງສຳຮອງເງິນຕາຕ່າງປະເທດ............................................................ 18
ຮູບສະແດງ 18. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ............................................................ 19
ຮູບສະແດງ 19. ໂຄງປະກອບຂອງດຸນບັນຊີການເງິນ.................................................................... 20
ຮູບສະແດງ 20. ໜີ້ສິນຕໍ່ຕ່າງປະເທດຂອງລັດຖະບານ.................................................................. 21

# ສາລະບານຕາຕະລາງ

ຕາຕະລາງທີ 1. ຕົວເລກຊີ້ບອກເສດຖະກິດທີ່ສຳຄັນຂອງ ສປປ ລາວ ........................................ 30
ຕາຕະລາງທີ 2. ລວມຍອດຜະລິດຕະພັນພາຍໃນ ຄິດໄລ່ຕາມມູນຄ່າເພີ່ມ (ຕື້ກີບ) ................................ 31
ຕາຕະລາງທີ 3. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານ ເດືອນ 12/2015 = 100).................................. 32
ຕາຕະລາງທີ 4. ອັດຕາເງິນເຟີ້ (%) ........................................................................... 33
ຕາຕະລາງທີ 5. ຖານະການເງິນຂອງລັດ (ຕື້ກີບ)............................................................. 34
ຕາຕະລາງທີ 6. ລາຍຮັບງົບປະມານ (ຕື້ກີບ) ................................................................ 36
ຕາຕະລາງທີ 7. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ)........................................... 37
ຕາຕະລາງທີ 8. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ)................................................ 38
ຕາຕະລາງທີ 9. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ) .................................................. 39
ຕາຕະລາງທີ 10. ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດ (ຄິດເປັນສ່ວນຮ້ອຍຕໍ່ປີ) .................. 40
ຕາຕະລາງທີ 11. ເງິນຝາກຂອງທະນາຄານທຸລະກິດ (ຕື້ກີບ) ..................................................... 42
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ (ຕື້ກີບ) ..................................................... 43
ຕາຕະລາງທີ 13. ດຸນການຊຳລະກັບຕ່າງປະເທດ (ລ້ານໂດລາສະຫະລັດ)............................................. 44
ຕາຕະລາງທີ 14. ການຄ້າຕ່າງປະເທດ (ລ້ານໂດລາສະຫະລັດ) ...................................................... 46
ຕາຕະລາງທີ 15. ໜີ້ສິນຕໍ່ຕ່າງປະເທດ (ລ້ານໂດລາສະຫະລັດ)...................................................... 47
ຕາຕະລາງທີ 16. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ................................................ 48
ຕາຕະລາງທີ 17. ຕົວເລກນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວຂອງ ສປປ ລາວ.................. 49
ຕາຕະລາງທີ 18. ທີ່ຕັ້ງສຳນັກງານຂອງແຕ່ລະທະນາຄານທຸລະກິດ.................................................... 50
ຕາຕະລາງທີ 19. ລາຍຊື່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ ທຫລ ຄຸ້ມຄອງ.............................. 51



## ຄຳເຫັນຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ໃນປີ 2021, ເສດຖະກິດຂອງ ສປປ ລາວ ໄດ້ຄ່ອຍໆຟື້ນຕົວຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຍ້ອນປັດໄຈທັງພາຍໃນ ແລະ ພາຍນອກ. ໃນຂະນະທີ່ເສດຖະກິດໂລກໄດ້ຟື້ນຕົວຈາກການແຜ່ລະບາດຂອງພະຍາດໂຄວິດ-19, ໃນປີ 2021 ຈະຂະຫຍາຍຕົວ 5,9% ຈາກທີ່ຫົດຕົວລົງ 3,1% ໃນປີ 2020[1], ເຖິງແມ່ນວ່າຈະມີການແຜ່ລະບາດຂອງພະຍາດໂຄວິດ-19 ຫຼາຍຮອບຈາກສາຍພັນໃໝ່ເດວຕາກໍ່ຕາມ, ການເປີດຕົວວັກຊີນປ້ອງກັນໂຄວິດ ແລະ ກະຈາຍສັກວັກຊີນໃນຫຼາຍປະເທດ ສົ່ງຜົນໃຫ້ພາກທຸລະກິດ ແລະ ຜູ້ບໍລິໂພກມີການປັບຕົວດີຂຶ້ນ ພ້ອມທັງຊຸກຍູ້ໃຫ້ການດຳເນີນນະໂຍບາຍການເງິນ ແລະ ນະໂຍບາຍເງິນຕາຂອງບັນດາປະເທດ, ໄດ້ເຮັດໃຫ້ກິດຈະກຳທາງເສດຖະກິດໃນຫຼາຍປະເທດກັບຄືນມາເຄື່ອນໄຫວໄດ້ອີກເທື່ອໜຶ່ງ.

ທ່າມກາງການຟື້ນຕົວຂອງເສດຖະກິດໂລກ, ປີ 2021 ຖືເປັນປີທີ່ສຳຄັນສຳລັບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ເນື່ອງຈາກ ເປັນປີທຳອິດໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ (2021-2023), ເປັນປີທີ່ເປີດນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ທີ່ຄາດວ່າຈະຫັນປ່ຽນ ສປປ ລາວ ຈາກການເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ໃຫ້ກາຍເປັນຈຸດສູນກາງໃນການເຊື່ອມໂຍງໃນພາກພື້ນ ແລະ ມີການພັດທະນາໂຄງການບໍລິການດ້ານການຂົນສົ່ງຂະໜາດໃຫຍ່. ເຖິງແມ່ນວ່າໃນເຄິ່ງປີທີ່ຜ່ານມາ ເສດຖະກິດໄດ້ປະເຊີນກັບການອ່ອນຄ່າຂອງອັດຕາແລກປ່ຽນ ແລະ ແຮງກົດດັນຈາກອັດຕາເງິນເຟີ້, ແຕ່ການເພີ່ມຂຶ້ນຂອງອັດຕາການສັກວັກຊີນໃນຂອບເຂດທົ່ວປະເທດ ໄດ້ສ້າງເງື່ອນໄຂອັນດີຕໍ່ກິດຈະກຳທາງເສດຖະກິດທີ່ສຳຄັນໃຫ້ກັບຄືນມາເຄື່ອນໄຫວໄດ້ອີກເທື່ອໜຶ່ງ. ນອກນີ້, ການຟື້ນຕົວ ຢ່າງແຂງແຮງຂອງປະເທດເສດຖະກິດຂະໜາດໃຫຍ່ ໄດ້ຊຸກຍູ້ການສົ່ງອອກສິນຄ້າຈາກ ສປປ ລາວ ແລະ ຊ່ວຍສະໜັບສະໜູນການປັບປຸງຖານະການເງິນຕໍ່ຕ່າງປະເທດຂອງລາວ, ເຮັດໃຫ້ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນ 0,2% ຈາກ 3,28% ໃນປີ 2020 ມາເປັນ 3,48% ໃນປີ 2021.

ໃນປີ 2021, ທະນາຄານແຫ່ງ ສປປ ລາວ ໄດ້ດຳເນີນນະໂຍບາຍ ແລະ ມາດຕະການທີ່ຫຼາກຫຼາຍເພື່ອຮັບປະກັນໃນການຮັກສາສະຖຽນລະພາບທາງການເງິນ-ເງິນຕາ ພ້ອມທັງສະໜັບສະໜູນການຟື້ນຕົວຂອງເສດຖະກິດທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ ດ້ວຍການປັບປຸງອັດຕາແລກປ່ຽນອ້າງ

---

[1] ບົດລາຍງານທ່າອ່ຽງເສດຖະກິດໂລກ ຂອງກອງທຶນການເງິນສາກົນ ໃນເດືອນ ເມສາ 2021

ອີງ ໃຫ້ມີຄວາມຍືດຍຸ່ນຫຼາຍຂຶ້ນ ເພື່ອສະທ້ອນເຖິງຄວາມບໍ່ແນ່ນອນຂອງເສດຖະກິດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ. ພ້ອມນີ້, ພາກເອກະຊົນກໍໄດ້ຮັບການຊ່ວຍເຫຼືອຈາກມາດຕະການດ້ານນະໂຍບາຍເງິນຕາຕ່າງໆ ເຊິ່ງລວມມີ ການປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ, ການຮັກສາອັດຕາດອກເບ້ຍພື້ນຖານຢູ່ໃນລະດັບຕໍ່າ ເພື່ອຊຸກຍູ້ການປ່ອຍກູ້ຂອງທະນາຄານທຸລະກິດໃຫ້ແກ່ຫົວໜ່ວຍວິສາຫະກິດໃນໄລຍະທີ່ເສດຖະກິດຂະຫຍາຍຕົວຊ້າ ແລະ ສະໜອງສິນເຊື່ອຜ່ານທະນາຄານທຸລະກິດ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs). ການຈັດຕັ້ງປະຕິບັດນະໂຍບາຍເງິນຕາດັ່ງກ່າວ ໄດ້ເຮັດໃຫ້ປະລິມານສິນເຊື່ອໃຫ້ພາກສ່ວນເສດຖະກິດເພີ່ມຂຶ້ນ ເຊິ່ງກວມເອົາ 47,19% ຂອງ GDP, ການຂະຫຍາຍຕົວຂອງປະລິມານເງິນ M2 ຂະຫຍາຍຕົວໃນລະດັບ 23,98%, ໃນຂະນະທີ່ສາມາດຮັກສາອັດຕາເງິນເຟີ້ຢູ່ໃນລະດັບຕໍ່າທີ່ 3,75%. ນອກຈາກນີ້, ການຈັດຕັ້ງປະຕິບັດນະໂຍບາຍຄຸ້ມຄອງອັດຕາແລກປ່ຽນທີ່ມີຄວາມຍືດຍຸ່ນຫຼາຍຂຶ້ນ ໄດ້ເຮັດໃຫ້ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຕະຫຼາດ ແຄບເຂົ້າ ຈາກ 20,76% ໃນເດືອນ ສິງຫາ 2021 , ເຊິ່ງເປັນອັດຕາທີ່ກວ້າງທີ່ສຸດ, ມາຢູ່ໃນລະດັບ 5,83% ໃນເດືອນທັນວາ 2021, ແລະ ສະເລ່ຍໝົດປີ 2021 ຢູ່ໃນລະດັບ 11,76% ສຳລັບເງິນກີບທຽບກັບເງິນໂດລາ, ໃນຂະນະທີ່ສ່ວນຕ່າງອັດຕາແລກປ່ຽນສຳລັບເງິນກີບທຽບກັບເງິນບາດ ໄດ້ແຄບເຂົ້າຈາກ 2,30% ມາເປັນ 0,16% ໃນໄລຍະດຽວກັນ, ແລະ ສະເລ່ຍໝົດປີ 2021 ຢູ່ໃນລະດັບ 0,73%. ເຖິງຢ່າງໃດກໍຕາມ, ການຮັກສາສະຖຽນລະພາບຂອງຄ່າເງິນກີບໃນປີທີ່ຜ່ານມາຍັງເປັນສິ່ງທ້າທາຍ ເນື່ອງຈາກເງິນກີບໄດ້ອ່ອນຄ່າລົງ 9,07% ທຽບກັບໂດລາສະຫະລັດ ເຊິ່ງອ່ອນຄ່າສູງກວ່າເປົ້າໝາຍທີ່ໄດ້ກຳນົດໄວ້ຢູ່ໃນລະດັບ 5%.

ໃນປີ 2022, ເສດຖະກິດຂອງ ສປປ ລາວ ຄາດວ່າຈະຂະຫຍາຍຕົວດີຂຶ້ນໃນລະດັບ 4,4% ໂດຍໄດ້ຮັບແຮງຍູ້ໜູນຫຼັກຈາກການຂະຫຍາຍຕົວຂອງການສົ່ງອອກຜະລິດຕະພັນກະສິກຳສູ່ຕະຫຼາດ ສປ. ຈີນ ຜ່ານການນຳໃຊ້ເສັ້ນທາງລົດໄຟລາວ-ຈີນ, ການຜະລິດໄຟຟ້າທີ່ເພີ່ມຂຶ້ນ, ການຂະຫຍາຍໂຄງການກໍ່ສ້າງພື້ນຖານໂຄງລ່າງ, ການກັບຄືນມາດຳເນີນການຂອງຂະແໜງອຸດສາຫະກຳການຜະລິດ, ການເປີດປະເທດຕ້ອນຮັບນັກທ່ອງທ່ຽວ ແລະ ການປັບປຸງການຄຸ້ມຄອງເງິນຕາຕ່າງປະເທດໃຫ້ດີຂຶ້ນ. ເຖິງຢ່າງໃດກໍຕາມ, ທ່າອ່ຽງການຂະຫຍາຍຕົວທາງເສດຖະກິດຂອງ ສປປ ລາວ ອາດຖືກກະທົບໂດຍ ການເພີ່ມຂຶ້ນຂອງອັດຕາເງິນເຟີ້ ທີ່ເກີດຈາກລາຄາພະລັງງານ ແລະ ລາຄາອາຫານທີ່ເພີ່ມສູງຂຶ້ນຢ່າງໄວວາ, ການດຳເນີນນະໂຍບາຍທີ່ຮັດກຸມຂຶ້ນ, ແລະ ເສດຖະກິດໂລກທີ່ຂະຫຍາຍຕົວຊ້າລົງ. ສະນັ້ນ, ສິ່ງທ້າທາຍໃນການດຳເນີນນະໂຍບາຍໃນປີ 2022 ແມ່ນການຊັ່ງຊາຄວາມສົມດຸນລະຫວ່າງ ນະໂຍບາຍເງິນຕາແບບຮັດກຸມເພື່ອຄວບຄຸມອັດຕາເງິນເຟີ້ ແລະ ຫຼຸດຜ່ອນແຮງກົດດັນຕໍ່ການອ່ອນຄ່າຂອງອັດຕາແລກປ່ຽນ ຄຽງຄູ່ກັບ ນະໂຍບາຍ ແລະ ມາດຕະການຕ່າງໆເພື່ອຊຸກຍູ້ການຟື້ນຕົວຂອງເສດຖະກິດທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ, ລວມເຖິງນະໂຍບາຍສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**



**ສອນໄຊ ສິດພະໄຊ**

## I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ

ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ, ເສດຖະກິດຂອງ ສປປ ລາວ ໄດ້ຂະຫຍາຍຕົວພຽງແຕ່ 3,3% ໃນປີ 2020 ເຊິ່ງເປັນອັດຕາການຂະຫຍາຍຕົວທີ່ຕໍ່າທີ່ສຸດ ນັບຕັ້ງແຕ່ປີ 1990. ເຖິງຢ່າງໃດກໍຕາມ, ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ໃນປີ 2021 ແມ່ນໄດ້ເພີ່ມຂຶ້ນ 0,2% ຈາກ 3,28% ໃນປີ 2020 ມາເປັນ 3,48% ໃນປີ 2021 (ຮູບສະແດງ 1) ເຊິ່ງຖືເປັນສັນຍານທຳອິດຂອງການຟື້ນຕົວທາງເສດຖະກິດ. ນອກຈາກນີ້, ອັດຕາການສັກວັກຊີນທີ່ເພີ່ມຂຶ້ນ ໄດ້ສ້າງເງື່ອນໄຂອັນດີສຳລັບການກັບມາເປີດດຳເນີນກິດຈະກຳທາງເສດຖະກິດທີ່ສຳຄັນອີກຄັ້ງໜຶ່ງ ແລະ ໄດ້ສົ່ງຜົນໃຫ້ການຜະລິດສິນຄ້າ ແລະ ບໍລິການ ລວມທັງການບໍລິໂພກພາຍໃນມີການຂະຫຍາຍຕົວ ເຊັ່ນດຽວກັນກັບການຟື້ນຕົວຂອງປະເທດທີ່ມີເສດຖະກິດຂະໜາດໃຫຍ່ເຊັ່ນ ສປ.ຈີນ ເຊິ່ງໄດ້ຊຸກຍູ້ການສົ່ງອອກສິນຄ້າຈາກ ສປປ ລາວ. ມູນຄ່າລວມຍອດຜະລິດຕະພັນພາຍໃນ ເພີ່ມຂຶ້ນຈາກ 172.919 ຕື້ກີບ ໃນປີ 2020, ມາເປັນ 184.982 ຕື້ກີບ (ຕາມລາຄາໃນປີ) ແລະ ລາຍໄດ້ສະເລ່ຍຕໍ່ຫົວຄົນ ສາມາດບັນລຸໄດ້ 25 ລ້ານກີບ ຫຼື ທຽບເທົ່າ 2.595 ໂດລາສະຫະລັດ ໃນປີ 2021 (ຕາຕະລາງຊ້ອນທ້າຍ 2).

**ຮູບສະແດງ 1. ອັດຕາການຂະຫຍາຍຕົວຂອງເສດຖະກິດ ແຕ່ປີ 2017 – 2021**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

### 1.1. ຂະແໜງອຸດສາຫະກຳ

ຂະແໜງອຸດສາຫະກຳ ຂະຫຍາຍຕົວ 6,1% ເຊິ່ງກວມເອົາ 34% ຂອງ GDP ແລະ ຍັງເປັນຂະແໜງການທີ່ປະກອບສ່ວນໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດຫຼາຍທີ່ສຸດ. ໃນນັ້ນ, ທ່າແຮງທີ່ໄດ້ປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງອຸດສາຫະກຳໄດ້ປ່ຽນຈາກ ຂະແໜງບໍ່ແຮ່ ແລະ ຂຸດຄົ້ນ ມາເປັນ ຂະແໜງພະລັງງານໄຟຟ້າ ແລະ ຂະແໜງກໍ່ສ້າງ ເຊິ່ງຂະແໜງດັ່ງກ່າວໄດ້ຮັບຜົນກະທົບຕໍ່າຈາກການລະບາດຂອງພະຍາດ ລວມທັງຄວາມຕໍ່ເນື່ອງຂອງໂຄງການຂະໜາດໃຫຍ່ເຊັ່ນ ໂຄງການທາງດ່ວນ ແລະ ທາງລົດໄຟ ລາວ-ຈີນ. ສຳລັບອັດຕາການຂະຫຍາຍຕົວຂອງຂະແໜງພະລັງງານໄຟຟ້າ, ກໍ່ສ້າງ ແລະ ອຸດສາຫະກຳປຸງແຕ່ງ ໄດ້ຂະຫຍາຍຕົວ

8,2%; 8,9%; ແລະ 4,7% ຕາມລຳດັບ (ຮູບສະແດງ 2). ນອກຈາກນີ້, ຂະແໜງອຸດສາຫະກຳປຸງແຕ່ງອື່ນໆ ຂະຫຍາຍຕົວ 4,7% ແລະ ຂະແໜງການບໍ່ແຮ່ ແລະ ການຂຸດຄົ້ນ ຂະຫຍາຍຕົວ 1,6% (ຕາຕະລາງຊ້ອນທ້າຍ 2).

**ຮູບສະແດງ 2. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງອຸດສາຫະກຳ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## 1.2. ຂະແໜງກະສິກຳ

ຂະແໜງກະສິກຳ ຂະຫຍາຍຕົວ 2,5%, ກວມເອົາ 16% ຂອງ GDP ເຊິ່ງທ່າແຮງສຳຄັນທີ່ປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງກະສິກຳແມ່ນ ການປູກຝັງ, ລ້ຽງສັດ ແລະ ປ່າໄມ້. ໃນນັ້ນ, ການຜະລິດເຂົ້າສາມາດຜະລິດໄດ້ບັນລຸ 3,6 ລ້ານໂຕນ ລື່ນແຜນ 5%. ຄຽງຄູ່ກັນນັ້ນ, ຜົນຜະລິດສາລີ, ມັນຕົ້ນ, ໝາກຖົ່ວ, ກາເຟ, ອ້ອຍ ແລະ ໝາກໄມ້ກິນໝາກ ກໍໄດ້ຂະຫຍາຍຕົວເພີ່ມຂຶ້ນເມື່ອທຽບໃສ່ປີຜ່ານມາ ເຊັ່ນດຽວກັນກັບການລ້ຽງສັດ ແລະ ປະມົງ ທີ່ຂະຫຍາຍຕົວເພີ່ມຂຶ້ນ (ຮູບສະແດງ 3 ແລະ ຕາຕະລາງຊ້ອນທ້າຍ 2).

**ຮູບສະແດງ 3. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງກະສິກຳ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## 1.3. ຂະແໜງບໍລິການ

ສຳລັບການຂະຫຍາຍຕົວຂອງຂະແໜງບໍລິການແມ່ນສືບຕໍ່ໄດ້ຮັບແຮງຍູ້ໜູນຈາກ ຂະແໜງການຍ່ອຍເຊັ່ນ ການຂາຍຍົກ ຂາຍຍ່ອຍ ແລະ ສ້ອມແປງພາຫະນະ, ທີ່ພັກອາໄສ ແລະ ອະສັງຫາລິມາຊັບ, ການສື່ສານ ແລະ ການສຶກສາ. ໃນປີ 2021, ຂະແໜງບໍລິການໄດ້ຂະຫຍາຍຕົວ 1,4%, ເຊິ່ງກວມເອົາ 38,1% ຂອງ GDP ໂດຍໃນເຄິ່ງປີທຳອິດ, ຂະແໜງການນີ້ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກພະຍາດ ໂຄວິດ-19 ແລະ ໄດ້ປະເຊີນກັບຄວາມຫຍຸ້ງຍາກໃນການດັດປັບທຸລະກິດ ເນື່ອງຈາກມາດຕະການທີ່ຈຳກັດເຊັ່ນ ປິດດ່ານສາກົນ ແລະ ດ່ານປະເພນີ, ປິດຮ້ານອາຫານ ແລະ ຮ້ານບັນເທີງ, ໂຈະຖ້ຽວບິນພາຍໃນປະເທດ ແລະ ການເດີນທາງລະຫວ່າງແຂວງຕໍ່ແຂວງ. ແຕ່ເຖິງຢ່າງໃດກໍຕາມ, ຂະແໜງການທ່ອງທ່ຽວມີທ່າອ່ຽງຂະຫຍາຍຕົວຂຶ້ນ ເນື່ອງຈາກການຜ່ອນຄາຍບັນດາມາດຕະການທີ່ຈຳກັດ ແລະ ການເປີດນຳໃຊ້ທາງລົດໄຟລາວ-ຈີນ ເຊິ່ງເປັນປັດໄຈທີ່ອຳນວຍໃຫ້ປະຊາຊົນມີການເດີນທາງໄປມາຫາສູ່ກັນຫຼາຍຂຶ້ນໃນທ້າຍປີທີ່ຜ່ານມາ (ຮູບສະແດງ 4 ແລະ ຕາຕະລາງຊ້ອນທ້າຍ 2).

**ຮູບສະແດງ 4. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງບໍລິການ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## 1.4. ອັດຕາເງິນເຟີ້

ອັດຕາເງິນເຟີ້ຂອງ ສປປ ລາວ ໃນປີ 2021 ໄດ້ສະແດງໃຫ້ເຫັນເຖິງທ່າອ່ຽງທີ່ຫຼຸດລົງ, ເຊິ່ງຫຼຸດລົງຈາກ 5,10% ໃນປີ 2020 ມາຢູ່ໃນລະດັບ 3,75% (ຮູບສະແດງ 5). ສາເຫດຫຼັກທີ່ເຮັດໃຫ້ເງິນເຟີ້ຫຼຸດລົງມາຈາກການຫຼຸດລົງຂອງລາຄາສິນຄ້າໝວດອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ, ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ, ໝວດເຄື່ອງໃຊ້ຄົວເຮືອນ ເຊັ່ນດຽວກັນກັບ ລາຄາສິນຄ້າໝວດຮັກສາສຸຂະພາບ ແລະ ຢາປົວພະຍາດ. ການຫຼຸດລົງຂອງລາຄາສິນຄ້າທີ່ກ່າວມານັ້ນ ໄດ້ຊົດເຊີຍການເພີ່ມຂຶ້ນຂອງລາຄາສິນຄ້າ ໝວດເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ, ໝວດທີ່ພັກອາໄສ ນໍ້າປະປາ ໄຟຟ້າ ແລະ ເຊື້ອໄຟຫຸງຕົ້ມ, ການຄົມມະນາຄົມ ແລະ ການຂົນສົ່ງ ລວມທັງໝວດຮ້ານອາຫານ ແລະ ໂຮງແຮມ (ຕາຕະລາງຊ້ອນທ້າຍ 4). ນອກຈາກນີ້, ການຫຼຸດລົງຂອງລາຄາສິນຄ້າທີ່ຜະລິດພາຍໃນປະເທດຍັງຊົດເຊີຍການເພີ່ມຂຶ້ນຂອງລາຄາສິນຄ້ານຳເຂົ້າອີກດ້ວຍ (ຮູບສະແດງ 6).

**ຮູບສະແດງ 5. ການປະກອບສ່ວນຂອງໝວດສິນຄ້າຕໍ່ອັດຕາເງິນເຟີ້ລວມ ໄລຍະ 5 ປີຜ່ານມາ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ຮູບສະແດງ 6. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານໍາເຂົ້າ.**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## II. ຂະແໜງການເງິນຂອງລັດ

### 2.1. ຖານະການເງິນຂອງລັດ

ໃນປີ 2021, ລັດຖະບານໄດ້ຈັດຕັ້ງປະຕິບັດບັນດານະໂຍບາຍເພື່ອກະຕຸ້ນການຂະຫຍາຍຕົວຂອງເສດຖະກິດ ສິ່ງຜົນໃຫ້ການຂາດດຸນງົບປະມານຫຼຸດລົງ. ໃນນັ້ນ, ລາຍຮັບຈາກພາສີອາກອນແມ່ນເພີ່ມຂຶ້ນ

24,41% ເມື່ອທຽບກັບປີທີ່ຜ່ານມາ. ການປະຕິບັດດຸນງົບປະມານຂອງລັດຖະບານໄດ້ຂາດດຸນ 2.329,07 ຕື້ກີບ ຫຼຸດລົງຈາກ 5,22% ຕໍ່ GDP ໃນປີ 2020 ມາເປັນຂາດດຸນ 1,26% ໃນປີ 2021.

## 2.2. ລາຍຮັບງົບປະມານ

ໃນປີ 2021, ລາຍຮັບງົບປະມານປະຕິບັດໄດ້ 27.178,34 ຕື້ກີບ ເພີ່ມຂຶ້ນ 24,41% ທຽບກັບປີຜ່ານມາ ແລະ ກວມອັດຕາສ່ວນ 13,75% ຂອງ GDP (ໃນນີ້, ລາຍຮັບພາຍໃນ ສາມາດປະຕິບັດໄດ້ 23.499,37 ຕື້ກີບ, ເງິນຊ່ວຍເຫຼືອລ້າ 3.677,73 ຕື້ກີບ ແລະ ເງິນປະກອບສ່ວນຂອງສັງຄົມ 1,25 ຕື້ກີບ). ສາເຫດຕົ້ນຕໍມາຈາກ ລາຍຮັບພາຍໃນເພີ່ມຂຶ້ນ ທັງລາຍຮັບທີ່ແມ່ນພາສີ-ອາກອນ ເປັນຕົ້ນແມ່ນການເພີ່ມຂຶ້ນຂອງການເກັບລາຍຮັບ ຈາກພາສີຂາອອກ, ອາກອນຈາກຊັບພະຍາກອນທຳມະຊາດ, ອາກອນຊົມໃຊ້, ຄ່າພາກຫຼວງໄຟຟ້າ ແລະ ລາຍຮັບ ທີ່ບໍ່ໄດ້ມາຈາກພາສີ-ອາກອນເຊັ່ນ ເງິນປັນຜົນ ແລະ ຄ່າຫຼຸ້ຍຫ້ຽນ, ກອງທຶນຮັກສາປ່າໄມ້, ລາຍຮັບຈາກຄ່າເຊົ່າ, ລາຍຮັບບໍລິຫານວິຊາການ ແລະ ອື່ນໆ ເຊິ່ງການເພີ່ມຂຶ້ນຂອງລາຍຮັບງົບປະມານ ແມ່ນມາຈາກການ ປະກອບສ່ວນຕົ້ນຕໍຂອງລາຍຮັບທີ່ບໍ່ແມ່ນພາສີ (ຮູບສະແດງ 7 ແລະ ຕາຕະລາງຊ້ອນທ້າຍ 6). ໃນຂະນະທີ່ ລາຍຮັບງົບປະມານທີ່ມາຈາກຄ່າພາກຫຼວງໄມ້, ອາກອນກຳໄລ, ອາກອນທີ່ດິນ, ພາສີຂາເຂົ້າ, ແລະ ຄ່າທຳນຽມ ຕ່າງໆຫຼຸດລົງ ເຊິ່ງເປັນຜົນສະທ້ອນມາຈາກຄວາມຫຍຸ້ງຍາກຂອງການດຳເນີນກິດຈະການ ທີ່ມີຜົນມາຈາກການ ແຜ່ລະບາດຂອງພະຍາດ ໂຄວິດ-19 ທັງພາຍໃນ ແລະ ປະເທດອ້ອມຂ້າງ, ປະລິມານການນຳເຂົ້າສິນຄ້າຫຼຸດລົງ ພ້ອມທັງມີການຍົກເວັ້ນພາສີນຳເຂົ້າສິນຄ້າບາງລາຍການ ໂດຍສະເພາະສິນຄ້າທີ່ມີຄວາມຈຳເປັນຕໍ່ການດຳລົງ ຊີວິດຂອງປະຊາຊົນ ເປັນຕົ້ນແມ່ນຢາປົວພະຍາດ ແລະ ແຈ້ງການຫ້າມຕັດໄມ້ເພື່ອການສົ່ງອອກໃນໄລຍະຜ່ານ ມາ.

**ຮູບສະແດງ 7. ລາຍຮັບງົບປະມານ**




**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

### 2.3. ລາຍຈ່າຍງົບປະມານ

ລາຍຈ່າຍງົບປະມານທັງໝົດ ປະຕິບັດໄດ້ 29.507,42 ຕື້ກີບ, ຫຼຸດລົງ 4,38% ທຽບກັບປີຜ່ານມາ, ກວມອັດຕາສ່ວນ 15,95% ຕໍ່ GDP. ທັງນີ້, ລາຍຈ່າຍງົບປະມານທີ່ຫຼຸດລົງ ສາເຫດມາຈາກການຈຳກັດລາຍຈ່າຍບໍລິຫານລົງ ແລະ ການລົງທຶນຂອງພາກລັດຖະບານທີ່ຫຼຸດລົງ.

**ຮູບສະແດງ 8. ລາຍຈ່າຍງົບປະມານ**




**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

### 2.4. ດຸ່ນດ່ຽງງົບປະມານ

ການດຸ່ນດ່ຽງງົບປະມານຂອງລັດຖະບານ ມີມູນຄ່າ 2.329,07 ຕື້ກີບ ຫຼຸດລົງ 74,16% ທຽບກັບປີຜ່ານມາ ແລະ ກວມເອົາອັດຕາສ່ວນ 1,26% ຂອງ GDP ເຊິ່ງປະກອບດ້ວຍ ແຫຼ່ງທຶນຈາກຕ່າງປະເທດ (ສຸດທິ) 867,58 ຕື້ກີບ ແລະ ແຫຼ່ງທຶນພາຍໃນ (ສຸດທິ) 1.461,50 ຕື້ກີບ (ຮູບສະແດງ 9). ໃນນັ້ນ, ການດຸ່ນດ່ຽງງົບປະມານສ່ວນໃຫຍ່ສາມາດປະຕິບັດໄດ້ ຈາກການຈຳໜ່າຍພັນທະບັດຄັງເງິນພາຍໃນ ທີ່ມີມູນຄ່າ 3.755,80 ຕື້ກີບ (ຕາຕະລາງຊ້ອນທ້າຍ 5).

**ຮູບສະແດງ 9. ດຸ່ນດ່ຽງງົບປະມານ**




**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

## III. ຂະແໜງເງິນຕາ-ການເງິນ

### 3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ

ໃນປີ 2021, ທຫລ ໄດ້ດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍ ເພື່ອຊຸກຍູ້ໃຫ້ທະນາຄານທຸລະກິດປ່ອຍສິນເຊື່ອໃຫ້ຫົວໜ່ວຍທຸລະກິດ ພ້ອມທັງປະຕິບັດນະໂຍບາຍອັດຕາແລກປ່ຽນໃຫ້ມີຄວາມຍືດຍຸ່ນຫຼາຍຂຶ້ນ ເພື່ອສະທ້ອນເຖິງຄວາມບໍ່ແນ່ນອນຂອງເສດຖະກິດໃນໄລຍະທີ່ມີການລະບາດຂອງພະຍາດໂຄວິດ-19. ໃນນີ້, ການດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍປະກອບດ້ວຍ: ການປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ, ການສືບຕໍ່ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ແລະ ການອັດສີດເງິນເຂົ້າສູ່ລະບົບເສດຖະກິດໂດຍຜ່ານທະນາຄານທຸລະກິດ . ໃນນີ້, ອັດຕາສ່ວນເງິນແຮຝາກບັງຄັບໄດ້ປັບຫຼຸດລົງຈາກ 4% ເປັນ 3% ສຳລັບສະກຸນເງິນກີບ ແລະ 8% ເປັນ 5% ສຳລັບສະກຸນເງິນຕາຕ່າງປະເທດ ໃນເດືອນພຶດສະພາ 2021. ອັດຕາດອກເບ້ຍພື້ນຖານຂອງ ທຫລ ໄດ້ຮັກສາໄວ້ຢູ່ໃນລະດັບທີ່ຕ່ຳທີ່ສຸດໃນຮອບ 15 ປີ ເຊິ່ງຢູ່ໃນລະດັບ 3% ສຳລັບເງິນກູ້ໄລຍະຕ່ຳກວ່າ 1 ອາທິດ, 4% ສຳລັບເງິນກູ້ໄລຍະ 1-2 ອາທິດ ແລະ 9% ສຳລັບເງິນກູ້ໄລຍະ 2 ອາທິດ ແຕ່ບໍ່ເກີນ 1 ປີ. ນອກນີ້, ຍັງໄດ້ປະຕິບັດມາດຕະການກ່ຽວກັບນະໂຍບາຍສິນເຊື່ອເພື່ອຫຼຸດຜ່ອນຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຊຸກຍູ້ການຟື້ນຟູເສດຖະກິດ ເຊິ່ງປະກອບມີ ການເລື່ອນຊຳລະເງິນຕົ້ນ ແລະ ດອກເບ້ຍ, ຊຸກຍູ້ໃຫ້ທະນາຄານທຸລະກິດປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມ ໃຫ້ແກ່ບັນດາບໍລິສັດທີ່ໄດ້ຮັບຜົນກະທົບ ແລະ ຊຸກຍູ້ໃຫ້ທະນາຄານທຸລະກິດສະໜອງສິນເຊື່ອໃໝ່ໃຫ້ແກ່ລູກຄ້າ.

ສຳລັບນະໂຍບາຍອັດຕາແລກປ່ຽນ, ທຫລ ໄດ້ປັບປຸງອັດຕາແລກປ່ຽນອ້າງອີງເງິນກີບທຽບເງິນໂດລາ ໃຫ້ມີຄວາມຍືດຍຸ່ນຫຼາຍຂຶ້ນ ໂດຍກອບການເໜັງຕີງອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາໄດ້ປັບກວ້າງອອກຈາກ ລະດັບ ±0,25% ມາເປັນ ±1,50% ທຽບກັບອັດຕາແລກປ່ຽນອ້າງອີງຂອງ ທຫລ, ສ່ວນຕ່າງລະຫວ່າງອັດຕາຊື້-ຂາຍສຳລັບເງິນກີບທຽບກັບເງິນໂດລາ ບໍ່ເກີນ 0,50%, ເງິນກີບທຽບກັບເງິນບາດ ແລະ ກີບທຽບກັບເງິນເອີໂຣບໍ່ເກີນ 0,75% ແລະ 2% ສຳລັບເງິນຕາສະກຸນອື່ນໆ. ໝາຍຄວາມວ່າທະນາຄານທຸລະກິດສາມາດກຳນົດອັດຕາແລກປ່ຽນຂອງຕົນເອງໄດ້ຕ່ຳກວ່າ 1,5% ຫຼື ສູງກວ່າ -1,5% ຈາກອັດຕາອ້າງອີງຂອງ ທຫລ ເຊິ່ງທ່າອ່ຽງການເຄື່ອນໄຫວຂອງອັດຕາແລກປ່ຽນອ້າງອີງກໍໄດ້ຮັບການປະເມີນ ແລະ ດັດປັບຢ່າງເປັນປົກກະຕິ ເພື່ອໃຫ້ສອດຄ່ອງກັບທ່າອ່ຽງຂອງອັດຕາຕະຫຼາດ.

ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ທຫລ ໄດ້ປັບປຸງວຽກງານຄຸ້ມຄອງເງິນຕາຕ່າງປະເທດ ໂດຍໄດ້ອອກແຈ້ງການກ່ຽວກັບການໂຈະຮັບຄຳຮ້ອງ ແລະ ການອອກໜັງສືອະນຸຍາດ ດຳເນີນທຸລະກິດຮ້ານແລກປ່ຽນເງິນຕາໃນເດືອນມິຖຸນາ ແລະ ແຈ້ງການກ່ຽວກັບການຫັນຮ້ານແລກປ່ຽນເງິນຕາໄປເປັນຕົວແທນຂອງທະນາຄານທຸລະກິດໃນເດືອນກໍລະກົດ ປີ 2021 ເພື່ອໃຫ້ທະນາຄານທຸລະກິດເປັນຜູ້ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາຢ່າງໃກ້ຊິດ. ພ້ອມດຽວກັນນີ້, ທຫລ ໄດ້ເລັ່ງປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ. ຈຸດປະສົງຂອງການປັບປຸງແມ່ນເພື່ອລົບລ້າງຊ່ອງຫວ່າງທີ່ອາດຈະຈຳກັດການໄຫຼເຂົ້າຂອງເງິນຕາຕ່າງປະເທດ ທີ່ມາຈາກການຄ້າ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ.

ໃນປີ 2021, ເງິນກີບອ່ອນຄ່າສະເລ່ຍ 9,07% ທຽບເງິນໂດລາສະຫະລັດ ແລະ ອ່ອນຄ່າ 8,08% ທຽບເງິນບາດ. ໃນຂະນະທີ່ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຂອງ ທະນາຄານທຸລະກິດ ແລະ ຕະຫຼາດ ຢູ່ໃນລະດັບ 11,76% ສຳລັບເງິນກີບທຽບກັບເງິນໂດລາ ແລະ 0,73% ສຳລັບເງິນກີບທຽບກັບເງິນບາດ (ຮູບສະແດງ 10). ຕົວເລກດັ່ງກ່າວໄດ້ສະທ້ອນເຖິງຄວາມຕ້ອງການເງິນຕາຕ່າງປະເທດ ໃນການດຳເນີນທຸລະກິດ ແລະ ຊຳລະໜີ້ສິນທີ່ເປັນເງິນຕາຕ່າງປະເທດຢູ່ໃນລະດັບສູງ ລວມທັງຄວາມບອບບາງຂອງເສດຖະກິດລາວຕໍ່ກັບຜົນກະທົບຈາກພາຍນອກເຊັ່ນ ການຖົດຖອຍຂອງເສດຖະກິດໂລກ.

**ຮູບສະແດງ 10. ການປ່ຽນແປງຂອງອັດຕາແລກປ່ຽນ )+( ແຂງຄ່າ ແລະ )-( ອ່ອນຄ່າ**







**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

### 3.2. ຖານເງິນຕາ

ຖານເງິນຕາ ຢູ່ໃນລະດັບ 40.010,56 ຕື້ກີບ, ເພີ່ມຂຶ້ນ 23,23% ທຽບກັບຜ່ານມາ. ໃນນີ້ ຊັບສິນຕ່າງປະເທດສຸດທິ ຂະຫຍາຍຕົວ 1,90% ເນື່ອງຈາກທະນາຄານທຸລະກິດໄດ້ຮັບເງິນກູ້ຈາກຕ່າງປະເທດ. ນອກຈາກນີ້, ທຫລ ຍັງໄດ້ປະຕິບັດນະໂຍບາຍສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19 (ຮູບສະແດງ 11).

**ຮູບສະແດງ 11. ໂຄງປະກອບຂອງຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

### 3.3. ປະລິມານເງິນ

ປະລິມານເງິນ (M2) ໃນປີ 2021 ຢູ່ໃນລະດັບ 138.724,30 ຕື້ກີບ (ຕາຕະລາງ 9), ໄດ້ເພີ່ມຂຶ້ນຢ່າງໄວວາຈາກ 16.33% ໃນເດືອນທັນວາ ປີ 2020 ມາເປັນ 23,98% ໃນເດືອນທັນວາ ປີ 2021 ແລະ ກວມເອົາ 74,99% ຕໍ່ GDP. ການຂະຫຍາຍຕົວດັ່ງກ່າວໄດ້ສະທ້ອນໃຫ້ເຫັນເຖິງ ຜົນຂອງການກະຕຸ້ນເສດຖະກິດ ແລະ ກະແສເງິນທຶນໄຫຼເຂົ້າ ຂອງໂຄງການທີ່ມີຂະໜາດໃຫຍ່ເປັນຕົ້ນແມ່ນ ໂຄງການທາງລົດໄຟລາວ-ຈີນ ແລະ ການກໍ່ສ້າງທາງດ່ວນວຽງຈັນ-ວັງວຽງ. ຄຽງຄູ່ກັນກັບທະນາຄານທຸລະກິດບາງແຫ່ງໄດ້ປັບປຸງໂຄງສ້າງການຈັດຕັ້ງຂອງຕົນ ແລະ ໄດ້ສະໜອງສິນເຊື່ອເຂົ້າໃນລະບົບເສດຖະກິດຫຼາຍຂຶ້ນ. ນອກຈາກນີ້, ການຂະຫຍາຍຕົວຂອງປະລິມານເງິນ (M2) ແມ່ນໄດ້ຮັບແຮງຜົນກະທົບຈາກ ການອ່ອນຄ່າຂອງເງິນກີບເມື່ອທຽບກັບເງິນໂດລາສະຫະລັດ ໃນຂະນະທີ່ ການປະກອບສ່ວນຂອງເງິນຝາກທີ່ເປັນເງິນຕາຕ່າງປະເທດ ຕໍ່ການຂະຫຍາຍຕົວຂອງປະລິມານເງິນ (M2) ແມ່ນໄດ້ເພີ່ມຂຶ້ນຈາກ 59% ໃນປີ 2020 ມາເປັນ 70% ໃນປີ 2021 (ຮູບສະແດງ 12).

**ຮູບສະແດງ 12. ການຂະຫຍາຍຕົວຂອງປະລິມານເງິນ )M2(**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການປະກອບສ່ວນຕໍ່ການຂະຫຍາຍຕົວຂອງ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

## 3.4. ອັດຕາດອກເບ້ຍ

ອັດຕາດອກເບ້ຍເງິນກູ້ໄລຍະເວລາ 1 ປີ ຂອງທະນາຄານທຸລະກິດ ສຳລັບສະກຸນເງິນກີບ ໄດ້ເພີ່ມຂຶ້ນຈາກ 9,97% ມາເປັນ 10%, ສະກຸນເງິນບາດ ເພີ່ມຂຶ້ນຈາກ 8,39% ມາເປັນ 8,61% ແລະ ສະກຸນເງິນໂດລາ ສະຫະລັດ ເພີ່ມຂຶ້ນຈາກ 8,15% ມາເປັນ 8,22%. ໃນຂະນະທີ່, ອັດຕາດອກເບ້ຍເງິນຝາກ ໄລຍະເວລາ 1 ປີ ຂອງທະນາຄານທຸລະກິດ ສຳລັບສະກຸນເງິນກີບ ເມື່ອທຽບກັບປີ 2020 ແມ່ນຫຼຸດລົງເລັກນ້ອຍສຳລັບສະກຸນເງິນ ກີບ ແລະ ສຳລັບສະກຸນເງິນບາດ ຈາກ 5,37% ມາເປັນ 5,33%, ແລະ ຈາກ 3,48% ມາເປັນ 3,47% ຕາມລຳ ດັບ. ສຳລັບສະກຸນເງິນໂດລາສະຫະລັດເພີ່ມຂຶ້ນຈາກ 3,72% ມາເປັນ 3,74% (ຮູບສະແດງ 13).

**ຮູບສະແດງ 13. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ເງິນຝາກ

ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງບຸກຄົນທີ່ມີຖິ່ນຖານຢູ່ຕ່າງປະເທດ) ຂະຫຍາຍຕົວ 25% ເມື່ອທຽບກັບປີຜ່ານມາ ຈາກ 102.520,80 ຕື້ກີບ ໃນປີ 2020 ມາເປັນ 128.149,93 ຕື້ກີບ ໃນປີ 2021, ເຊັ່ນດຽວກັນກັບ ອັດຕາສ່ວນຕໍ່ GDP ທີ່ເພີ່ມຂຶ້ນຈາກ 64,51% ມາເປັນ 75,50% ໃນໄລຍະດຽວກັນ ແລະ ຄຽງຄູ່ກັນກັບ ການຂະຫຍາຍຕົວຂອງອັດຕາສ່ວນເງິນຝາກທີ່ເປັນເງິນຕາຕ່າງປະເທດ ຕໍ່ປະລິມານເງິນ (M2) (ຮູບສະແດງ 14 ແລະ ຕາຕະລາງຊ້ອນທ້າຍ 11).

**ຮູບສະແດງ 14. ໂຄງປະກອບຂອງເງິນຝາກ**



## 3.6. ສິນເຊື່ອ

ຕົວເລກສິນເຊື່ອຂອງທະນາຄານທຸລະກິດ ຫຼັງຈາກທີ່ຫຼຸດລົງຢ່າງໜັກ ໃນປີ 2020 ໄດ້ກັບມາຂະຫຍາຍຕົວໃກ້ຄຽງກັບໄລຍະກ່ອນມີການລະບາດໃນປີ 2019. ໃນນັ້ນ, ຕົວເລກສິນເຊື່ອຂອງທະນາຄານທຸລະກິດໃນປີ 2021 ໄດ້ຂະຫຍາຍຕົວ 11,58% ເມື່ອທຽບກັບປີຜ່ານມາ ຈາກ 78.237,87 ຕື້ກີບ ມາເປັນ87.298,64 ຕື້ກີບ ແລະ ກວມເອົາ 50,93% ຂອງ GDP. ຈຳນວນສິນເຊື່ອດັ່ງກ່າວ ໄດ້ສະໜອງໃຫ້ແກ່ 4 ຂະແໜງການ ເຊິ່ງປະກອບມີ ຂະແໜງບໍລິການ, ຂະແໜງການຄ້າ, ຂະແໜງສະໜອງວັດຖຸ ແລະ ເຕັກນິກ ແລະ ຂະແໜງອຸດສະຫະກຳ. ນອກຈາກນີ້, ປະລິມານສິນເຊື່ອໃນລະຫວ່າງປີ 2019-2021 ເມື່ອທຽບກັບຂະໜາດຂອງເສດຖະກິດ ແມ່ນໄດ້ຂະຫຍາຍຕົວຢ່າງໝັ້ນຄົງ. ໃນນັ້ນ, ປະລິມານສິນເຊື່ອທີ່ເປັນເງິນຕາຕ່າງປະເທດກວມເອົາ 52,90% ຂອງສິນເຊື່ອທັງໝົດ, ໃນຂະນະທີ່ ສິນເຊື່ອທີ່ບໍ່ເກີດດອກອອກຜົນ (NPL) ໄດ້ຫຼຸດລົງຈາກ 3,16% ໃນປີ 2020 ມາເປັນ 2,18% ໃນປີ 2021, (ຮູບສະແດງ 15 ແລະ ຕາຕະລາງຊ້ອນທ້າຍ 12).

**ຮູບສະແດງ 15. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມຂະແໜງການ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ຍອດເຫຼືອສິນເຊື່ອໃນລະບົບເສດຖະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.7. ລະບົບສະຖາບັນການເງິນ-ເງິນຕາ

ທຫລ ໄດ້ແນໃສ່ເສີມຂະຫຍາຍການປະຕິບັດໜ້າທີ່ຂອງທະນາຄານແຫ່ງລັດ. ໃນນັ້ນ, ໄດ້ປັບໂຄງສ້າງທະນາຄານຂອງລັດ 2 ແຫ່ງຄື: ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ ໂດຍໃຫ້ພາກເອກະຊົນຖືຮຸ້ນ 70 ສ່ວນຮ້ອຍ ແລະ ພາກລັດຖືຮຸ້ນ 30 ສ່ວນຮ້ອຍ ເຊັ່ນດຽວກັນກັບ ທະນາຄານແຫ່ງລັດອີກແຫ່ງ ໜຶ່ງຄື ທະນາຄານນະໂຍບາຍ ທີ່ໄດ້ມີການປະຕິຮູບດ້ານໂຄງຮ່າງການຈັດຕັ້ງ ເພື່ອໃຫ້ແທດເໝາະກັບການໃຫ້ບໍລິການ ທີ່ເນັ້ນໃສ່ການພັດທະນາຊົນນະບົດຂອງປະເທດໃຫ້ດີຂຶ້ນ.

ຄຽງຄູ່ກັນນັ້ນ ທຫລ ໄດ້ສືບຕໍ່ຊຸກຍູ້ການປະຕິບັດນະໂຍບາຍຜ່ອນຜັນດ້ານສິນເຊື່ອ ໃຫ້ແກ່ລູກຄ້າເງິນກູ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ ໂຄວິດ-19 ເປັນຕົ້ນແມ່ນ ຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດ ໂຄວິດ-19 (ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020) ແລະ ຂໍ້ຕົກລົງວ່າດ້ວຍໂຄງການສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ ໂຄວິດ-19 (ສະບັບເລກທີ 318/ທຫລ, ລົງວັນທີ 19 ພຶດສະພາ 2020). ໃນນັ້ນ, ຂໍ້ຕົກລົງສະບັບເລກທີ 238/ທຫລ ປະກອບມີ 4 ມາດຕະການຫຼັກຄື ການເລື່ອນເວລາຊຳລະທັງຕົ້ນທຶນ ແລະ ດອກເບ້ຍ, ການປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມ, ການສະໜອງເງິນກູ້ບ້ວງໃໝ່ ແລະ ການປັບໂຄງສ້າງໜີ້ເງິນກູ້. ສຳລັບ ຂໍ້ຕົກລົງສະບັບເລກທີ 318/ທຫລ ມີຈຸດປະສົງ

ເພື່ອໃຫ້ເງິນກູ້ໃນອັດຕາດອກເບ້ຍຕໍ່າທີ່ 5,5% ຕໍ່ປີ ແລະ ກຳນົດໄລຍະເວລາຊຳລະຄືນຍາວເຖິງ 6 ປີ. ນອກຈາກນີ້, ທຫລ ຍັງໄດ້ຊຸກຍູ້ການປັບປຸງກົນໄກການເຂົ້າເຖິງແຫຼ່ງທຶນຂອງ ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໃຫ້ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງສະດວກ ແລະ ວ່ອງໄວກວ່າເກົ່າ ເຊິ່ງໄດ້ສະແດງອອກຄື ຕົວເລກສິນເຊື່ອທີ່ສະໜອງໂດຍທະນາຄານທຸລະກິດໃນເດືອນຕຸລາ ປີ 2020 ບັນລຸ 16.000,94 ຕື້ກີບ ແລະ 20,11 ຕື້ກີບ ສຳລັບສິນເຊື່ອທີ່ສະໜອງໂດຍສະຖາບັນການເງິນ.

ມາຮອດທ້າຍປີ 2021, ລະບົບສະຖາບັນການເງິນ-ເງິນຕາ ປະກອບມີທະນາຄານທຸລະກິດ 44 ແຫ່ງ (ຕາຕະລາງ 18), ມີ 114 ສາຂາຂອງທະນາຄານທຸລະກິດ, ໜ່ວຍບໍລິການ 541 ແຫ່ງ, ຕູ້ ATM 1.416 ແຫ່ງ, ເຄື່ອງຮູດບັດ EDC ຈຳນວນ 4.578 ເຄື່ອງ ຢູ່ໃນຂອບເຂດທົ່ວປະເທດ ແລະ ບັດ ATM ຈຳນວນ 1.629.448 ບັດ. ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີທັງໝົດ 217 ແຫ່ງ (ຕາຕະລາງຊ້ອນທ້າຍ 19) ແລະ ມີຍອດຊັບສິນທັງໝົດ 8.447,96 ຕື້ກີບ. ສາມາດລະດົມເງິນຝາກໄດ້ 1.788,26 ຕື້ກີບ (ຫຼຸດລົງ 17,28% ເມື່ອທຽບກັບທ້າຍປີ 2020) ແລະ ສາມາດສະໜອງສິນເຊື່ອໃຫ້ແກ່ສັງຄົມໄດ້ 6.389,25 ຕື້ກີບ (ເພີ່ມຂຶ້ນ 23,17% ເມື່ອທຽບກັບທ້າຍປີ 2020).

ນອກຈາກນັ້ນ, ລະບົບການຊຳລະຂອງປະເທດ ໄດ້ຮັບການສືບຕໍ່ປັບປຸງເທື່ອລະກ້າວ, ໃນນັ້ນ ລະບົບການຊຳລະທຸລະກຳຍ່ອຍ ໄດ້ຮັບການພັດທະນາ ແລະ ສາມາດເປີດນຳໃຊ້ການໂອນເງິນເທິງມືຖືຂ້າມທະນາຄານ (Lao Mobile Payment Switching) ແລະ ໄດ້ເຊື່ອມຕໍ່ກັບລະບົບຂໍ້ມູນທາງການເງິນຂອງລັດຖະບານ (GFIS) ຂອງກະຊວງການເງິນ ເພື່ອສະໜັບສະໜູນການເກັບລາຍຮັບພາຍໃນໃຫ້ດີຍິ່ງຂຶ້ນ. ພ້ອມດຽວກັນນີ້ ທຫລ ໄດ້ຮ່ວມມືກັບກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອຄົ້ນຄວ້າ ແລະ ສ້າງລະບຽບການໃນການຄຸ້ມຄອງຊັບສິນດີຈິຕອນ ເຊັ່ນ ຂໍ້ຕົກລົງວ່າດ້ວຍການເຮັດທົດລອງທຸລະກຳຊັບສິນດີຈິຕອນ (ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021).

ສຳລັບການພັດທະນາຕະຫຼາດທຶນ, ທຫລ ໄດ້ສຳເລັດການອອກຈຳໜ່າຍພັນທະບັດລັດຖະບານຜ່ານຕະຫຼາດຫຼັກຊັບລາວ (ຕລຊລ) 02 ສະກຸນເງິນຄື: 1.278 ຕື້ກີບ ແລະ 7,75 ລ້ານໂດລາສະຫະລັດ (01/2021-12/2021). ເມື່ອຮອດທ້າຍປີ 2021, ຕລຊລ ມີບໍລິສັດຈົດທະບຽນທັງໝົດ 11 ແຫ່ງ ແລະ ສາມາດລະດົມທຶນໄດ້ທັງໝົດ 26.412,95 ຕື້ກີບ ກວມເອົາ 12,62% ຂອງ GDP ປີ 2021 ແລະ ມີມູນຄ່າຕະຫຼາດຫຼັກຊັບລາວທັງໝົດ 8.258,23 ຕື້ກີບ.

## IV. ດຸນການຊຳລະກັບຕ່າງປະເທດ

### 4.1. ດຸນການຊຳລະລວມ

ໃນປີ 2021, ຕົວເລກດຸນການຊຳລະກັບຕ່າງປະເທດ ໄດ້ສິ່ງສັນຍານໃນທາງບວກທີ່ມາຈາກການຟື້ນຕົວຈາກພະຍາດ ໂຄວິດ-19. ໃນນັ້ນ, ດຸນການຊຳລະລວມ ຂາດດຸນຢູ່ທີ່ 56,66 ລ້ານໂດລາສະຫະລັດທຽບເທົ່າ, ໃນຂະນະທີ່ ຕົວເລກດຸນບັນຊີຊຳລະປົກກະຕິ ເກີນດຸນຢູ່ທີ່ 446,50 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງໄດ້ຮັບການປະກອບສ່ວນມາຈາກ ດຸນການຄ້າທີ່ເກີນດຸນ ໃນແຕ່ລະໄຕມາດທີ່ຜ່ານມາ ໂດຍສະເພາະສອງໄຕມາດສຸດທ້າຍຂອງປີທີ່ຜ່ານມາ. ຄຽງຄູ່ກັນນັ້ນ, ດຸນບັນຊີທຶນ ແລະ ດຸນບັນຊີການເງິນ ມີກະແສທຶນໄຫຼເຂົ້າສຸດທິ 310,64 ລ້ານ

ໂດລາສະຫະລັດທຽບເທົ່າ ເຊິ່ງໂດຍສ່ວນໃຫຍ່ແມ່ນການໄຫຼເຂົ້າຂອງກະແສເງິນ FDI (ຮູບສະແດງ 16 ແລະ ຕາຕະລາງ 13). ສິ່ງຜົນໃຫ້ ລວມຍອດຄັງສຳຮອງເງິນຕາຕ່າງປະເທດ ເມື່ອຮອດທ້າຍປີ 2021 ມີມູນຄ່າ 1.262,51 ລ້ານໂດລາສະຫະລັດ ແລະ ສາມາດຮອງຮັບການນຳເຂົ້າສິນຄ້າໄດ້ 3,86 ເດືອນ (ຮູບສະແດງ 17 ແລະ ຕາຕະລາງ 1).

**ຮູບສະແດງ 16. ດຸນການຊຳລະກັບຕ່າງປະເທດ**







**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ຮູບສະແດງ 17. ລວມຍອດຄັງສຳຮອງເງິນຕາຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ

## 4.2. ດຸນບັນຊີຊຳລະປົກກະຕິ

ດຸນບັນຊີຊຳລະປົກກະຕິໃນປີ 2021 ເກີນດຸນຢູ່ທີ່ 446,50 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເປັນຜົນມາຈາກການປະກອບສ່ວນທີ່ສຳຄັນຂອງດຸນການຄ້າໃນແຕ່ລະໄຕມາດ ໂດຍສະເພາະແມ່ນ ໃນໄລຍະ 2 ໄຕມາດສຸດທ້າຍຂອງປີທີ່ຜ່ານມາ. ໃນນັ້ນ, ຕົວເລກດຸນການຄ້າ ໄດ້ເກີນດຸນ 1.419,49 ລ້ານໂດລາສະຫະລັດ ຫຼື ເພີ່ມຂຶ້ນ 90,66% ທຽບໃສ່ປີທີ່ຜ່ານມາ. ຄຽງຄູ່ກັບຕົວເລກດັ່ງກ່າວ, ປະລິມານການສົ່ງອອກຂອງ ສປປ ລາວ ໄດ້ບັນລຸ 7.694,53 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 25,83% ເມື່ອທຽບກັບປີທີ່ຜ່ານມາ ເປັນຕົ້ນແມ່ນການສົ່ງອອກຜະລິດຕະພັນໄມ້ແປຮູບ, ເຍື່ອໄມ້ ແລະ ເຈ້ຍ, ແຮ່ທາດ ແລະ ກະແສໄຟຟ້າ. ເຖິງຢ່າງໃດກໍຕາມ, ຕົວເລກດຸນບໍລິການຂອງ ສປປ ລາວ ແມ່ນຂາດດຸນຢູ່ທີ່ 126,73 ລ້ານໂດລາສະຫະລັດ ຫຼື ຂາດດຸນເພີ່ມຂຶ້ນ 27,65% ເມື່ອທຽບກັບປີທີ່ຜ່ານມາ. ນອກຈາກນີ້, ດຸນລາຍຮັບຂັ້ນໜຶ່ງ ຂາດດຸນ 1.702,22 ລ້ານໂດລາສະຫະລັດ ຫຼື ຂາດດຸນຫຼຸດລົງ 4,96%. ໃນຂະນະທີ່ ດຸນລາຍຮັບຂັ້ນສອງ ໄດ້ສືບຕໍ່ເກີນດຸນທີ່ 225,97 ລ້ານໂດລາສະຫະລັດ ຫຼື ເກີນດຸນຫຼຸດລົງ 10,30% ເມື່ອທຽບກັບປີທີ່ຜ່ານມາເນື່ອງຈາກມູນຄ່າການຊ່ວຍເຫຼືອລ້າໃນປີ 2021 ໄດ້ຫຼຸດລົງ (ຮູບສະແດງ 18).

**ຮູບສະແດງ 18. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.3. ດຸນບັນຊີທຶນ ແລະ ບັນຊີການເງິນ

ໃນປີ 2021, ດຸນບັນຊີທຶນ ເກີນດຸນໃນລະດັບ 2,36 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 81,28% ເມື່ອທຽບກັບປີຜ່ານມາ, ເຊັ່ນດຽວກັນກັບ ດຸນບັນຊີການເງິນ ໄດ້ມີກະແສເງິນໄຫຼເຂົ້າ (ສຸດທິ) 308,28 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ມີກະແສເງິນໄຫຼເຂົ້າ (ສຸດທິ) 1.071,91 ລ້ານໂດລາສະຫະລັດທຽບເທົ່າ. ໃນຂະນະທີ່ການລົງທຶນໃນຫຼັກຊັບ ມີກະແສເງິນໄຫຼອອກ (ສຸດທິ) 310,25 ລ້ານໂດລາສະຫະລັດທຽບເທົ່າ ແລະ ການລົງທຶນອື່ນໆ ມີກະແສເງິນໄຫຼອອກ (ສຸດທິ) 453,38 ລ້ານໂດລາສະຫະລັດທຽບເທົ່າ (ຮູບສະແດງ 17 ແລະ ຕາຕະລາງຊ້ອນທ້າຍ 13).

**ຮູບສະແດງ 19. ໂຄງປະກອບຂອງດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.4. ໜີ້ສິນຕໍ່ຕ່າງປະເທດຂອງລັດຖະບານ

ຮອດທ້າຍປີ 2021, ຍອດໜີ້ສິນຕໍ່ຕ່າງປະເທດຂອງລັດຖະບານ ມີມູນຄ່າ 10.213,40 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 4,40% ເມື່ອທຽບໃສ່ປີຜ່ານມາ ແລະ ກວມອັດຕາສ່ວນ 53,81% ຕໍ່ GDP. ໃນນັ້ນ, ຍອດເງິນກູ້ຢືມ ມີຈຳນວນ 9.190,30 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 1,18% ເມື່ອທຽບໃສ່ປີຜ່ານມາ ແລະ ກວມອັດຕາສ່ວນ 80,98% ຕໍ່ຍອດໜີ້ສິນຕໍ່ຕ່າງປະເທດຂອງລັດຖະບານທັງໝົດ. ພ້ອມກັນນັ້ນ, ຍອດໜີ້ສິນຕໍ່ຕ່າງປະເທດທີ່ເປັນພັນທະບັດ ມີຈຳນວນ 1.023,10 ລ້ານໂດລາສະຫະລັດທຽບເທົ່າ ຫຼື ຫຼຸດລົງ 26,06% ເມື່ອທຽບໃສ່ປີຜ່ານມາ ແລະ ກວມອັດຕາສ່ວນ 10,02% ຕໍ່ຍອດໜີ້ສິນຕໍ່ຕ່າງປະເທດຂອງລັດຖະບານທັງໝົດ (ຮູບສະແດງ 19 ແລະ ຕາຕະລາງຊ້ອນທ້າຍ 15).

**ຮູບສະແດງ 20. ໜີ້ສິນຕໍ່ຕ່າງປະເທດຂອງລັດຖະບານ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## V. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2022

ເສດຖະກິດຂອງ ສປປ ລາວ ໃນປີ 2022 ຄາດວ່າຈະສືບຕໍ່ຟື້ນຕົວຈາກການແຜ່ລະບາດຂອງພະຍາດ ແຕ່ຈັງຫວະຂອງການຟື້ນຕົວ ລວມທັງການຂະຫຍາຍຕົວຂອງເສດຖະກິດທົ່ວໂລກ ຈະປະເຊີນກັບປັດໄຈສ່ຽງຫຼາຍດ້ານ. ລວມຍອດຜະລິດຕະພັນພາຍໃນ ຂອງ ສປປ ລາວ ຄາດການວ່າຈະຂະຫຍາຍຕົວ 4,4% ໂດຍຈະໄດ້ຮັບແຮງຍູ້ໜູນຈາກການສົ່ງອອກສິນຄ້າກະສິກຳ, ການສົ່ງອອກໄຟຟ້າ, ການຂະຫຍາຍຕົວຂອງຂະແໜງການກໍ່ສ້າງ ແລະ ການບໍລິການ ເຊິ່ງກິດຈະກຳທາງເສດຖະກິດຂອງຂະແໜງການດັ່ງກ່າວນີ້ ຈະກັບມາຟື້ນຕົວອີກຄັ້ງ ເນື່ອງຈາກບັນດາມາດຕະການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ຈະຜ່ອນຄາຍລົງເທື່ອລະກ້າວ ແລະ ອັດຕາການສັກວັກຊີນຂອງປະຊາຊົນທີ່ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ. ເຖິງຢ່າງໃດກໍຕາມ, ແຮງກົດດັນຕໍ່ກັບອັດຕາແລກປ່ຽນຍັງຄົງມີຢູ່ ເນື່ອງຈາກການເພີ່ມຂຶ້ນຂອງ ອັດຕາດອກເບ້ຍນະໂຍບາຍຢູ່ ສ.ອາເມລິກາ ແລະ ອຸປະສົງໃນການຊົມໃຊ້ເງິນຕາຕ່າງປະເທດຢູ່ຕະຫຼາດພາຍໃນ ຍັງຢູ່ໃນລະດັບສູງ. ນອກຈາກນີ້, ຄາດວ່າອັດຕາເງິນເຟີ້ຈະສູງກວ່າເປົ້າໝາຍທີ່ ສະພາແຫ່ງຊາດໄດ້ຕົກລົງເຫັນດີກຳນົດໄວ້ທີ່ 5%. ໃນນີ້, ປັດໄຈສຳຄັນທີ່ຈະສົ່ງຜົນກະທົບຕໍ່ການເພີ່ມຂຶ້ນຂອງອັດຕາເງິນເຟີ້ປະກອບມີ ລາຄານ້ຳມັນທີ່ເພີ່ມຂຶ້ນໃນຕະຫຼາດໂລກ ຈາກບັນຫາຄວາມຂັດແຍ່ງໃນພາກພື້ນ ແລະ ສາກົນ, ອັດຕາເງິນເຟີ້ທີ່ເພີ່ມສູງຂຶ້ນໃນປະເທດຄູ່ຄ້າເຊັ່ນ ປະເທດໄທ ລວມໄປເຖິງການສົ່ງຜ່ານການອ່ອນຄ່າຂອງອັດຕາແລກປ່ຽນ.

ເຖິງຢ່າງໃດກໍຕາມ, ເພື່ອຮັກສາສະຖຽນລະພາບທາງດ້ານເງິນຕາ ແລະ ສະໜັບສະໜູນການຟື້ນຕົວຂອງເສດຖະກິດຕາມເປົ້າໝາຍທີ່ວາງອອກ, ທຫລ ຈະຕິດຕາມສະພາບເສດຖະກິດທັງພາຍໃນ ແລະ ຕ່າງປະເທດຢ່າງໃກ້ຊິດ ເພື່ອສົມທົບກັນລະຫວ່າງການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ອັດຕາແລກປ່ຽນ ແລະ ການຄຸ້ມຄອງ

ເງິນຕາຕ່າງປະເທດຢ່າງເໝາະສົມ. ໃນນັ້ນ, ເຄື່ອງມືນະໂຍບາຍເງິນຕາທີ່ຈະຕ້ອງທົບທວນ ແລະ ດັດປັບຕາມຄວາມເໝາະສົມໃນແຕ່ລະໄລຍະປະກອບມີ ອັດຕາດອກເບ້ຍພື້ນຖານ ແລະ ອັດຕາສ່ວນເງິນແຮຝາກບັງຄັບ. ພ້ອມດຽວກັນນີ້ ຈະມີການພິຈາລະນາຄືນໃໝ່ກ່ຽວກັບນະໂຍບາຍສິນເຊື່ອເພື່ອຫຼຸດຜ່ອນແຮງກົດດັນຈາກອຸປະສົງ ແຕ່ຮັບປະກັນໃຫ້ສາມາດຮອງຮັບການຜະລິດເພື່ອທົດແທນການນຳເຂົ້າ ແລະ ຜະລິດເພື່ອສົ່ງອອກ ໂດຍສະເພາະການສົ່ງອອກແຮ່ທາດ, ສະໝຸນໄພ ແລະ ຜະລິດຕະພັນກະເສດອິນຊີ. ໃນຂະນະທີ່, ທຫລ ຈະສົ່ງເສີມໃຫ້ທະນາຄານທຸລະກິດສາມາດຮັກສາສະພາບຄ່ອງທາງດ້ານການເງິນຢ່າງມີປະສິດທິຜົນ ໂດຍໃຊ້ຕົວຊີ້ວັດທາງການເງິນທີ່ເໝາະສົມກວ່າໃນການຕິດຕາມ ແລະ ປະເມີນຜົນ ຄຽງຄູ່ໄປກັບການກະກຽມຄວາມພ້ອມໃນການອອກຈາກບັນດາມາດຕະການນະໂຍບາຍຜ່ອນຜັນດ້ານສິນເຊື່ອ ໃຫ້ແກ່ລູກຄ້າເງິນກູ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດພະຍາດໂຄວິດ-19 ເພື່ອກັບຄືນສູ່ສະພາບປົກກະຕິ. ເພື່ອຮັກສາສະຖຽນລະພາບຂອງເງິນກີບ, ທຫລ ຈະເພີ່ມປະສິດທິພາບຂອງການປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ໂດຍການປັບປຸງໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ, ທັນສະພາບ ແລະ ເສີມຂະຫຍາຍກົນໄກການດຳເນີນງານຂອງລະບຽບການ ຄຸ້ມຄອງເງິນຕາຕ່າງປະເທດສະບັບປັບປຸງ, ພັດທະນາຕະຫຼາດແລກປ່ຽນເງິນຕາຕ່າງປະເທດລະຫວ່າງທະນາຄານ (Interbank) ແລະ ປັບປຸງກົນໄກການສະໜອງເງິນຕາຕ່າງປະເທດຜ່ານທະນາຄານທຸລະກິດໃຫ້ແກ່ບັນດາບໍລິສັດທີ່ນຳເຂົ້າສິນຄ້າບູລິມະສິດ. ນອກຈາກນີ້, ເພື່ອເສີມສ້າງຄັງສຳຮອງເງິນຕາຕ່າງປະເທດໃຫ້ເຂັ້ມແຂງ, ທຫລ ຈະປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອສະເໜີໃຫ້ສະພາແຫ່ງຊາດຮັບຮອງໃນກາງປີ 2022. ໃນນັ້ນ, ທຫລ ຈະເປັນເຈົ້າການຊຸກຍູ້ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ການຈັດຕັ້ງປະຕິບັດກົດໝາຍສະບັບປັບປຸງ ແລະ ບັນດານິຕິກຳລຸ່ມກົດໝາຍທີ່ຈະອອກໃໝ່ ໂດຍສຸມໃສ່ການຄຸ້ມຄອງທຸລະກິດ ແລກປ່ຽນເງິນຕາ, ການເຄື່ອນຍ້າຍທຶນຂ້າມຊາຍແດນ, ການຄຸ້ມຄອງໜີ້ສິນ, ສິນເຊື່ອ ແລະ ເງິນຝາກທີ່ເປັນເງິນຕາຕ່າງປະເທດ.

# ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ



**ທ່ານ ສອນໄຊ ສິດພະໄຊ**
**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**



ທ່ານ ຄຳວົງ ທິບພະວົງ
ຮອງຜູ້ວ່າການ
ທະນາຄານແຫ່ງ ສປປ ລາວ



ທ່ານ ນ.ວັດທະນາ ດາລາລອຍ
ຮອງຜູ້ວ່າການ
ທະນາຄານ ແຫ່ງ ສປປ ລາວ



ທ່ານ ພຸດທະໄຊ ສີວິໄລ
ຮອງຜູ້ວ່າການ
ທະນາຄານ ແຫ່ງ ສປປ

# ສະພາບໍລິຫານທະນາຄານແຫ່ງ ສປປ ລາວ

| | |
|---|---|
| ທ່ານ ສອນໄຊ ສິດພະໄຊ | ຜູ້ວ່າການທະນາຄານແຫ່ງ ສປປ ລາວ;<br>ປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ປອ. ພູທະນູເພັດ ໄຊສົມບັດ | ຮອງລັດຖະມົນຕີກະຊວງການເງິນ;<br>ຮອງປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ນ. ວັດທະນາ ດາລາລອຍ | ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ;<br>ຮອງປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ນ. ຄໍາຈັນ ວົງແສນບຸນ | ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ;<br>ກໍາມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ສົມຈິດ ອິນທະມິດ | ຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ;<br>ກໍາມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ທອງພັດ ວົງມະນີ | ຮອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້;<br>ກໍາມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ນ. ທິບພະກອນ ຈັນທະວົງສາ | ຮອງລັດຖະມົນຕີ,<br>ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ;<br>ກໍາມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ປອ. ກິແກ້ວ ຈັນທະບູລີ | ຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ;<br>ກໍາມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |
| ທ່ານ ຮສ. ປອ. ພູເພັດ ກ້ຽວພິລາວົງ | ຄະນະບໍດີຄະນະເສດຖະສາດ ແລະ ບໍລິຫານທຸລະກິດ,<br>ມະຫາວິທະຍາໄລແຫ່ງຊາດ;<br>ກໍາມະການສະພາບໍລິຫານທະນາຄານແຫ່ງ ສປປ ລາວ. |

## ຄະນະກຳມະການນະໂຍບາຍເງິນຕາ

| | |
|---|---|
| ທ່ານ ສອນໄຊ ສີດພະໄຊ | ຜູ້ວ່າການທະນາຄານແຫ່ງ ສປປ ລາວ;<br>ເປັນປະທານ. |
| ທ່ານ ນ. ວັດທະນາ ດາລາລອຍ | ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ;<br>ເປັນຮອງປະທານ. |
| ທ່ານ ປອ. ບຸນເຫຼືອ ສິນໄຊວໍລະວົງ | ຮອງລັດຖະມົນຕີກະຊວງການເງິນ;<br>ເປັນກຳມະການ. |
| ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ | ຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;<br>ເປັນກຳມະການ. |
| ທ່ານ ໄພວັນ ຈັນດາວົງ | ຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ;<br>ເປັນກຳມະການ. |
| ທ່ານ ໄພເລີດ ພົນບຸລົມ | ຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ;<br>ເປັນກຳມະການ. |
| ທ່ານ ຄຳແກ້ວ ວິສີສົມບັດ | ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ;<br>ເປັນກຳມະການ. |
| ທ່ານ ອາລຸນ ບຸນຍົງ | ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ;<br>ເປັນກຳມະການ. |
| ທ່ານ ສຸລິສັກ ທຳນຸວົງ | ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ;<br>ເປັນກຳມະການ. |

## ຄະນະກຳມະການກວດກາ

| | |
|---|---|
| ທ່ານ ປອ. ພູທະນູເພັດ ໄຊສີມບັດ | ຮອງລັດຖະມົນຕີກະຊວງການເງິນ;<br>ເປັນປະທານ. |
| ທ່ານ ນ. ວັດທະນາ ດາລາລອຍ | ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ;<br>ເປັນຮອງປະທານ. |
| ທ່ານ ວຽງສະຫວັນ ໄຊຍະວົງ | ຫົວໜ້າກົມກວດກາ, ທະນາຄານແຫ່ງ ສປປ ລາວ;<br>ເປັນກຳມະການ. |
| ທ່ານ ສະຖິດ ເພັດສີງເລືອງ | ຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການສຳນັກງານນາຍົກ;<br>ເປັນກຳມະການ. |
| ທ່ານ ວົງສະຫວັນ ກັນຫາລີຄຳ | ຮອງຫົວໜ້າກົມກວດກາລັດ, ອົງການກວດກາແຫ່ງລັດ;<br>ເປັນກຳມະການ. |

## ບັນດາກົມ ແລະ ກົງຈັກທຽບເທົ່າກົມ ຢູ່ທະນາຄານແຫ່ງ ສປປ ລາວ

| | |
|---|---|
| ທ່ານ ປອ. ສັນຕິ ພົນເມືອງລາວ | ຊ່ວຍວຽກຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ |
| ທ່ານ ອ໊ອດ ພົນຊຽງດີ | ຊ່ວຍວຽກຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ |
| ທ່ານ ເພັດສະຖາພອນ ແກ້ວວົງວິຈິດ | ຫົວໜ້າຫ້ອງການ |
| ທ່ານ ພານຸສັກ ແກ່ນວົງພະຈັນ | ຫົວໜ້າກົມຈັດຕັ້ງແລະພະນັກງານ |
| ທ່ານ ວຽງສະຫວັນ ໄຊຍະວົງ | ຫົວໜ້າກົມກວດກາພາຍໃນ |
| ທ່ານ ຄຳພຸດ ສິດທິລາດ | ຫົວໜ້າກົມນະໂຍບາຍເງິນຕາ (ເດືອນ 01-06/2021) |
| ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ | ຫົວໜ້າກົມນະໂຍບາຍເງິນຕາ (ເດືອນ 06/2021-ປັດຈຸບັນ) |
| ທ່ານ ໂພທິຈັນ ທຳມະເທວາ | ວ່າການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ (ເດືອນ 01-06/2021) |
| ທ່ານ ອາລຸນ ບຸນຍົງ | ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ (ເດືອນ 06/2021-ປັດຈຸບັນ) |
| ທ່ານ ອາລຸນ ບຸນຍົງ | ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ (ເດືອນ 01 - 06/2021) |
| ທ່ານ ພູຂົງ ຈັນທະຈັກ | ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ (ເດືອນ 06/2021-ປັດຈຸບັນ) |
| ທ່ານ ຄຳແກ້ວ ວິສີສົມບັດ | ຫົວໜ້າກົມບໍລິການທະນາຄານ |
| ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ | ຫົວໜ້າກົມບັນຊີ ແລະ ການເງິນ (ເດືອນ 01 - 06/2021) |
| ທ່ານ ນ. ນະຄອນສີ ມະໂນທັມ | ວ່າການຫົວໜ້າກົມບັນຊີ ແລະ ການເງິນ (ເດືອນ 01/2021 - ປັດຈຸບັນ) |
| ທ່ານ ບຸນທະວີ ສຸກດາວົງ | ຫົວໜ້າກົມພິມຈຳໜ່າຍ |
| ທ່ານ ໄຂ່ແກ້ວ ຫຼວງສີວິໄລ | ຫົວໜ້າເຕັກໂນໂລຊີຂໍ້ມູນຂ່າວສານ |
| ທ່ານ ໄຊລືຊາ ຜຸຍຍະວົງ | ຫົວໜ້າກົມນິຕິກຳ |
| ທ່ານ ສຸລິສັກ ທຳນຸວົງ | ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ |
| ທ່ານ ນ. ຟອງຈິນດາ ແສງສຸລິວົງ | ຫົວໜ້າກົມຮ່ວມມືສາກົນ |
| ທ່ານ ປອ. ສັນຕິ ພົນເມືອງລາວ | ຫົວໜ້າສະຖາບັນການທະນາຄານ (ເດືອນ 01-08/2021) |
| ທ່ານ ປອ. ອາຄົມ ປຣະເສີດ | ຫົວໜ້າສະຖາບັນການທະນາຄານ (ເດືອນ 08/2021 - ປັດຈຸບັນ) |
| ທ່ານ ນ. ສາຍສະໝອນ ຈັນທະຈັກ | ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ |
| ທ່ານ ນ. ແພງສີ ແພງເມືອງ | ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ |
| ທ່ານ ນ. ຄຳເຜີຍ ວໍລະເດດ | ຫົວໜ້າໂຮງພິມທະນະບັດທະນາຄານແຫ່ງ ສປປ ລາວ |
| ທ່ານ ນ. ທິບພາວັນ ຈັນທະຜາສຸກ | ຫົວໜ້າສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ |

# ກົງຈັກການຈັດຕັ້ງຂອງ ທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ

| | |
|---|---|
| ທ່ານ ໂພຕະມີ ພຸດທະວົງ | ຫົວໜ້າສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ |
| ທ່ານ ວິສອນ ໄຊສົງຄາມ | ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ |
| ທ່ານ ຄຳຊ່ຽນ ມິ່ງບຸບຜາ | ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ (ເດືອນ 01-06/2021) |
| ທ່ານ ນ. ໂພທິຈັນ ທຳມະເທວາ | ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ (ເດືອນ 06/2021 - ປັດຈຸບັນ) |
| ທ່ານ ວົງພະຈັນ ແສງສຸວັນ | ຫົວໜ້າສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ |
| ທ່ານ ນອນຕາ ແກ້ວມະນີ | ຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ |

# ພາກສ່ວນທີ່ຂຶ້ນກັບການຊີ້ນຳຂອງທະນາຄານແຫ່ງ ສປປ ລາວ

| | |
|---|---|
| ທ່ານ ນ. ແສງດາວວີ ວົງຄຳຊາວ | ຫົວໜ້າສຳນັກງານປົກປ້ອງເງິນຝາກ |
| ທ່ານ ອ໊ອດ ພົນຊຽງດີ | ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ (ເດືອນ 01-08/2021) |
| ທ່ານ ນ. ສາຍສະໝອນ ຈັນທະຈັກ | ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ (ເດືອນ 09/2021-ປັດຈຸບັນ) |
| ທ່ານ ນ. ວິນຄຳ ລຸນທອນ | ຜູ້ອຳນວຍການໃຫຍ່ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ |

# ແຜນວາດ ໂຄງຮ່າງການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ



## ຕາຕະລາງທີ 1. ຕົວເລກຊີ້ບອກເສດຖະກິດທີ່ສຳຄັນຂອງ ສປປ ລາວ

| ລາຍການ | 2017 | 2018 | 2019 | 2020)P( | 2021)P( |
|---|---|---|---|---|---|
| **ຂະແໜງການຜະລິດ )ການປ່ຽນແປງຄິດເປັນສ່ວນຮ້ອຍ)** | | | | | |
| ລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່* | 6,85 | 6,29 | 5,46 | 3,28 | 3,48 |
| ອັດຕາເງິນເຟີ້ທ້າຍປີ | 0,15 | 1,48 | 6,28 | 3,19 | 5,27 |
| ອັດຕາເງິນເຟີ້ | 0,82 | 2,04 | 3,32 | 5,10 | 3,75 |
| **ການເງິນຂອງລັດ )ເປີເຊັນຕໍ່ GDP(** | **2017** | **2018** | **2019** | **2020)P(** | **2021)P(** |
| ລາຍຮັບງົບປະມານທັງໝົດ | 16,28 | 15,71 | 15,58 | 12,63 | 14,69 |
| ລາຍຮັບພາຍໃນ | 14,62 | 14,30 | 13,48 | 11,11 | 12,70 |
| ເງິນຊ່ວຍເຫຼືອລ້າ | 1,67 | 1,41 | 1,74 | 1,48 | 1,99 |
| ເງິນປະກອບສ່ວນຂອງສັງຄົມ | - | - | 0,12 | 0,04 | - |
| ລາຍຈ່າຍງົບປະມານທັງໝົດ | 21,83 | 20,34 | 18,83 | 17,85 | 15,95 |
| ລາຍຈ່າຍບໍລິຫານປົກກະຕິ | 12,55 | 12,09 | 12,63 | 11,41 | 10,84 |
| ລາຍຈ່າຍລົງທຶນ | 9,29 | 8,25 | 6,19 | 6,43 | 5,12 |
| ດຸນງົບປະມານ | -5,55 | -4,63 | -3,25 | -5,21 | -1,25 |
| ດຸນງົບປະມານ (ບໍ່ລວມເງິນຊ່ວຍເຫຼືອລ້າ) | -7,21 | -6,04 | -4,99 | -6,73 | -6,74 |
| **ຂະແໜງເງິນຕາ )ການປ່ຽນແປງຄິດເປັນສ່ວນຮ້ອຍ)** | **2017** | **2018** | **2019** | **2020** | **2021)P(** |
| ປະລິມານເງິນ (M2) | 12,23 | 8,37 | 18,85 | 16,33 | 23,98 |
| **ຂະແໜງການເງິນຕ່າງປະເທດ (ເປີເຊັນຕໍ່ GDP(** | **2017** | **2018)R(** | **2019)R(** | **2020)R(** | **2021)P(** |
| ດຸນການຊຳລະລວມ | 1,18 | -0,79 | 0,66 | 1,69 | -0,30 |
| ດຸນບັນຊີຊຳລະປົກກະຕິ | -7,38 | -9,10 | -6,99 | -1,21 | 2,35 |
| ດຸນການຄ້າ | -4,65 | -5,00 | -2,47 | -3,90 | 7,48 |
| ດຸນບັນຊີການເງິນ | -12,73 | -12,09 | -10,30 | -5,67 | -1,62 |
| ຍອດໜີ້ສິນຕໍ່ຕ່າງປະເທດ | 51,16 | 52,67 | 53,08 | 55,94 | 53,81 |
| **ຄັງສຳຮອງເງິນຕາຕ່າງປະເທດ (ລ້ານໂດລາສະຫະລັດ)** | 1.016,05 | 876,17 | 997,25 | 1.319,17 | 1.262,51 |
| ຕົວເລກກຸ້ມການນຳເຂົ້າຕໍ່ເດືອນ (ບໍ່ລວມການນຳເຂົ້າສິນຄ້າຂອງໂຄງການຂະໜາດໃຫຍ່) | 4,39 | 3,23 | 3,59 | 4,81 | 3,86 |

**ໝາຍເຫດ**: P ໝາຍເຖິງຕົວເລກເບື້ອງຕົ້ນ
R ໝາຍເຖິງຕົວເລກປັບປຸງໃໝ່
*: ລາຄາຄົງທີ່ ແມ່ນອີງໃສ່ຖານປີ 2012

**ແຫຼ່ງຂໍ້ມູນ**: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ; ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 2. ລວມຍອດຜະລິດຕະພັນພາຍໃນ ຄິດໄລ່ຕາມມູນຄ່າເພີ່ມ )ຕື້ກີບ(

| ລາຍການ | 2017 | 2018 | 2019 | 2020 | 2021)P( |
|---|---|---|---|---|---|
| **ລວມຍອດຜະລິດຕະພັນພາຍໃນ ຕາມລາຄາໃນປີ** | **140.789** | **152.414** | **162.657** | **172.919** | **184.982** |
| **ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ (ໂດລາສະຫະລັດ(** | **2.472** | **2.585** | **2.632** | **2.642** | **2.595** |
| **ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ )%(*** | **6,85** | **6,29** | **5,46** | **3,28** | **3,48** |
| **ລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່*** | **116.377** | **123.696** | **130.447** | **134.720** | **139.408** |
| **ກະສິກຳ** | **17.750** | **17.975** | **18.194** | **18.404** | **18.855** |
| ປູກຝັງ | 11.710 | 11.767 | 11.686 | 11.584 | 11.784 |
| ລ້ຽງສັດ | 2.437 | 2.510 | 2.637 | 2.772 | 2.866 |
| ປ່າໄມ້ | 1.090 | 1.066 | 1.111 | 1.154 | 1.194 |
| ປະມົງ | 2.513 | 2.631 | 2.761 | 2.894 | 3.012 |
| **ອຸດສາຫະກຳ** | **40.923** | **44.119** | **46.591** | **50.880** | **53.986** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 10.579 | 9.891 | 9.885 | 8.233 | 8.362 |
| ອຸດສາຫະກຳ ຜະລິດຕະພັນສະບຽງອາຫານ | 1.721 | 1.792 | 1.902 | 1.928 | 1.952 |
| ອຸດສາຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ | 1.627 | 1.703 | 1.814 | 1.870 | 1.894 |
| ອຸດສາຫະກຳ ຜະລິດແຜ່ນແພ, ເຄື່ອງນຸ່ງຫົ່ມ, ເກີບ ແລະ ເຄື່ອງໜັງ | 1.378 | 1.413 | 1.457 | 1.464 | 1.460 |
| ອຸດສາຫະກຳປຸງແຕ່ງອື່ນໆ | 4.642 | 5.044 | 5.449 | 6.724 | 7.042 |
| ພະລັງງານໄຟຟ້າ | 12.629 | 14.089 | 13.808 | 16.640 | 18.128 |
| ນ້ຳປະປາ ແລະ ບຳບັດສິ່ງເສດເຫຼືອ | 301 | 322 | 342 | 360 | 371 |
| ການກໍ່ສ້າງ | 8.046 | 9.864 | 11.936 | 13.661 | 14.777 |
| **ການບໍລິການ** | **45.882** | **49.044** | **52.409** | **51.783** | **52.493** |
| ຂາຍຍົກ ຂາຍຍ່ອຍ, ສ້ອມແປງພາຫະນະ | 15.566 | 17.231 | 18.658 | 18.899 | 19.210 |
| ຂົນສົ່ງ ແລະ ສາງ | 1.715 | 1.798 | 1.944 | 1.888 | 1.897 |
| ກິດຈະກຳທີ່ພັກອາໄສ ແລະ ບໍລິການອາຫານ | 3.010 | 3.242 | 3.502 | 1.574 | 1.175 |
| ຂ່າວສານ ແລະ ການສື່ສານ | 2.100 | 2.304 | 2.466 | 2.678 | 2.852 |
| ກິດຈະກຳການເງິນ ແລະ ປະກັນໄພ | 2.704 | 2.970 | 3.217 | 3.257 | 3.353 |
| ກິດຈະກຳອະສັງຫາລິມະຊັບ | 7.660 | 8.031 | 8.660 | 8.869 | 8.972 |
| ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ | 1.564 | 1.677 | 1.827 | 1.904 | 1.945 |
| ລັດບໍລິຫານ, ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ | 7.331 | 7.480 | 7.695 | 8.133 | 8.379 |
| ການສຶກສາ | 1.931 | 1.963 | 2.004 | 2.048 | 2.086 |
| ສຸຂະພາບ ແລະ ສະຫວັດດີການສັງຄົມ | 522 | 526 | 546 | 571 | 600 |
| ບໍລິການອື່ນໆ | 1.777 | 1.823 | 1.888 | 1.962 | 2.024 |
| **ລວມຍອດມູນຄ່າເພີ່ມທັງໝົດທຸກຂະແໜງການ** | **104.555** | **111.138** | **117.194** | **121.067** | **125.335** |
| ພາສີອາກອນຜະລິດຕະພັນ, ສຸດທິ** | 11.822 | 12.558 | 13.253 | 13.653 | 14,073 |

**ໝາຍເຫດ**: P ໝາຍເຖິງຕົວເລກເບື້ອງຕົ້ນ

*: ລາຄາຄົງທີ່ ແມ່ນອີງໃສ່ຖານປີ 2012

**: ອາກອນຕໍ່າສຸດ, ອາກອນຕົວເລກທຸລະກິດ, ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ແລະ ພາສີນຳເຂົ້າ-ສົ່ງອອກ

**ແຫຼ່ງຂໍ້ມູນ**: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 3. ດັດຊະນີລາຄາຜູ້ຊົມໃຊ້ )ທຽບຖານ ເດືອນ 12/2015 = 100(

| ໝວດສິນຄ້າ | 2017 | 2018 | 2019 | 2020 | 2021 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ 12 ໝວດສິນຄ້າ** | **102,14** | **104,23** | **107,69** | **113,18** | **117,43** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ** | **101,99** | **103,79** | **107,31** | **113,09** | **116,99** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **101,78** | **104,62** | **106,85** | **109,21** | **114,20** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ ແລະ ອາຫານສົດ** | **101,47** | **103,74** | **106,07** | **108,72** | **112,91** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ມີທາດເຫຼົ້າ | 102,57 | 103,84 | 108,70 | 118,06 | 121,61 |
| 2. ໝວດເຫຼົ້າ ແລະ ຢາສູບ | 101,34 | 102,23 | 104,91 | 106,20 | 110,93 |
| 3. ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ | 102,84 | 108,44 | 112,29 | 117,48 | 122,02 |
| 4. ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ | 101,94 | 103,86 | 104,77 | 105,37 | 108,56 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 101,59 | 102,92 | 105,27 | 110,23 | 114,40 |
| 6. ໝວດຮັກສາສຸຂະພາບ ແລະ ຢາ | 101,16 | 102,30 | 103,92 | 109,12 | 113,69 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 102,25 | 106,67 | 109,07 | 110,39 | 117,47 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 99,90 | 101,57 | 103,75 | 107,96 | 112,53 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 100,24 | 100,26 | 102,45 | 104,21 | 105,44 |
| 10. ໝວດການສຶກສາ | 100,58 | 101,05 | 102,00 | 102,87 | 103,41 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 101,93 | 104,40 | 106,43 | 105,41 | 108,73 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 102,04 | 103,55 | 106,59 | 115,76 | 125,11 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 4. ອັດຕາເງິນເຟີ້ )%(

| ໝວດສິນຄ້າ | 2017 | 2018 | 2019 | 2020)R( | 2021 |
|---|---|---|---|---|---|
| **ເງິນເຟີ້ລວມ** | **0,83** | **2,04** | **3,32** | **5,10** | **3,75** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ** | **0,48** | **1,77** | **3,39** | **5,39** | **3,44** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **1,55** | **2,79** | **2,14** | **2,21** | **4,56** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ ແລະ ອາຫານສົດ** | **0,99** | **2,24** | **2,25** | **2,49** | **3,86** |
| **ອັດຕາເງິນເຟີ້ແຕ່ລະໝວດສິນຄ້າ )%(** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ | -0,10 | 1,24 | 4,68 | 8,61 | 3,01 |
| 2. ໝວດເຫຼົ້າ ແລະ ຢາສູບ | 0,65 | 0,88 | 2,63 | 1,22 | 4,46 |
| 3. ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ | 2,41 | 5,45 | 3,55 | 4,62 | 3,86 |
| 4. ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ | 0,60 | 1,88 | 0,88 | 0,57 | 3,03 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 1,07 | 1,31 | 2,28 | 4,71 | 3,78 |
| 6. ໝວດຮັກສາສຸຂະພາບ ແລະ ຢາ | 0,96 | 1,13 | 1,59 | 5,00 | 4,19 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 2,86 | 4,33 | 2,25 | 1,21 | 6,42 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | -0,07 | 1,68 | 2,14 | 4,06 | 4,23 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 0,14 | 0,02 | 2,19 | 1,72 | 1,18 |
| 10. ໝວດການສຶກສາ | 0,45 | 0,47 | 0,94 | 0,85 | 0,52 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 1,15 | 2,42 | 1,95 | -0,97 | 3,15 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 1,36 | 1,48 | 2,93 | 8,60 | 8,08 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 5. ຖານະການເງິນຂອງລັດ )ຕື້ກີບ(

| ລາຍການ | 2017 | 2018 | 2019 | 2020 | 2021)P( |
|---|---|---|---|---|---|
| **ລາຍຮັບລວມ** | **22.925,01** | **23.943,78** | **25.340,53** | **21.845,75** | **27.178,34** |
| **ລາຍຮັບພາຍໃນ** | **20.579,48** | **21.795,66** | **22.511,34** | **19.215,59** | **23.499,37** |
| ລາຍຮັບພາສີອາກອນ | 16.918,44 | 17.032,24 | 17.747,94 | 15.764,60 | 18.533,67 |
| ລາຍຮັບບໍ່ແມ່ນພາສີອາກອນ | 3.661,04 | 4.763,42 | 4.763,40 | 3.450,99 | 4.965,70 |
| **ເງິນຊ່ວຍເຫຼືອລ້າ** | **2.345,53** | **2.148,12** | **2.632,19** | **2.565,28** | **3.677,73** |
| ເງິນຊ່ວຍເຫຼືອລ້າສຳລັບໂຄງການ | 876,91 | 684,57 | 711,29 | 841,24 | 724,90 |
| ເງິນຊ່ວຍເຫຼືອລ້າທີ່ບໍ່ແມ່ນສຳລັບໂຄງການ | 1.360,01 | 1.142,00 | 1.736,00 | 1.724,04 | 2.468,27 |
| ເງິນຊ່ວຍເຫຼືອລ້າທີ່ບໍ່ແມ່ນສຳລັບໂຄງການ (ຍີ່ປຸ່ນ) | - | - | - | - | - |
| ເງິນຊ່ວຍເຫຼືອລ້າໂຄງການດັດແກ້ມະຫາພາກ | 108,62 | 321,55 | 184,90 | - | 484,56 |
| **ເງິນປະກອບສ່ວນຂອງສັງຄົມ** | - | - | **197,00** | **64,88** | **1,25** |
| **ລາຍຈ່າຍລວມ** | **30.736,00** | **31.002,85** | **30.623,68** | **30.858,17** | **29.507,42** |
| **ລາຍຈ່າຍບໍລິຫານປົກກະຕິ** | **17.662,14** | **18.430,24** | **20.547,31** | **19.735,62** | **20.042,88** |
| ລາຍຈ່າຍບໍລິຫານປົກກະຕິ (ບໍ່ແມ່ນດອກເບ້ຍ) | 15.751,35 | 15.841,91 | 17.678,99 | 17.126,14 | 17.761,10 |
| ຊຳລະດອກເບ້ຍ | 1.910,80 | 2.588,33 | 2.868,32 | 2.609,48 | 2.281,77 |
| ຕ່າງປະເທດ | 1.490,84 | 2.084,40 | 2.428,21 | 2.100,26 | 1.729,46 |
| **ລາຍຈ່າຍລົງທຶນ** | **13.073,86** | **12.572,61** | **10.076,37** | **11.122,56** | **9.464,54** |
| **ດຸນເງິນສົດປົກກະຕິ** | **2.917,34** | **3.365,42** | **1.964,03** | **-520,03** | **3.456,50** |
| **ດຸນງົບປະມານ** | **-7.810,99** | **-7.059,06** | **-5.283,15** | **-9.012,42** | **-2.329,07** |
| (ບໍ່ລວມເງິນຊ່ວຍເຫຼືອລ້າ) | -10.156,52 | -9.207,19 | -8.112,34 | -11.642,58 | -6.008,04 |
| **ດຸ່ນດ່ຽງງົບປະມານ** | **7.810,99** | **7.059,06** | **5.283,15** | **9.012,42** | **2.329,07** |
| **ແຫຼ່ງທຶນພາຍໃນ** | **595,25** | **1.608,05** | **33,53** | **4.792,16** | **1.461,50** |
| **ລະບົບທະນາຄານ** | **351,31** | **916,65** | **-863,56** | **3.884,50** | **-1.093,19** |
| (ການເຄື່ອນໄຫວ) ບັນຊີເງິນຝາກຂອງລັດຖະບານຢູ່ ລະບົບທະນາຄານ | - | - | - | 507,11 | -1.879,29 |
| (ສິນເຊື່ອ) ລະບົບທະນາຄານ | -975,98 | 2.295,39 | -915,72 | 1.200,00 | - |
| ຊຳລະເງິນລ່ວງໜ້າໃຫ້ ທຫລ | - | - | 1.000,00 | -2.200,00 | - |
| (ຈຳໜ່າຍ) ພັນທະບັດຄັງເງິນ | - | 2.528,70 | 3.752,25 | 6.916,61 | 3.755,80 |
| (ໄຖ່ຖອນ) ພັນທະບັດຄັງເງິນ | -2.856,01 | -3.628,32 | -4.700,09 | -2.539,22 | -2.969,70 |
| (ຈຳໜ່າຍ) ພັນທະບັດລັດຖະບານ | 4.183,30 | 617,18 | - | - | - |
| (ໄຖ່ຖອນ) ພັນທະບັດລັດຖະບານ | -64,00 | -896,30 | - | - | - |
| **ບໍ່ແມ່ນລະບົບທະນາຄານ** | **243,94** | **691,41** | **897,10** | **907,66** | **2.544,68** |
| (ຈຳໜ່າຍ) ພັນທະບັດຄັງເງິນ | - | - | - | - | - |
| (ໄຖ່ຖອນ) ພັນທະບັດຄັງເງິນ | - | - | - | - | - |
| ຂາຍຊັບສິນ + ເງິນຊຳລະຕົ້ນທຶນ | 60,41 | 383,27 | 257,28 | 61,09 | 933,93 |
| ພັນທະບັດຊຳລະໜີ້ສິນໂຄງການລົງທຶນຂອງລັດ | - | - | 144,47 | - | - |
| ເງິນເກີນແຜນ | - | - | - | 249,32 | 407,75 |
| ຍອດເຫຼືອຜ່ານມາ | - | - | 363,42 | 274,27 | 980,18 |
| ຜິດດ່ຽງ | 183,53 | 308,14 | 131,93 | 322,98 | 232,82 |
| **ແຫຼ່ງທຶນຕ່າງປະເທດ (ສຸດທິ)** | **7.215,74** | **5.451,01** | **5.249,62** | **4.220,26** | **867,58** |
| (ຈຳໜ່າຍ) ພັນທະບັດລັດຖະບານ | 3.500,11 | 1.822,56 | 1.350,00 | - | - |
| ເງິນກູ້ຢືມມາດຸ່ນດ່ຽງ (ເປັນເງິນກູ້ຜ່ອນຜັນ) | - | - | 3.606,55 | - | - |

| | | | | | |
|---|---|---|---|---|---|
| ເງິນກູ້ຢືມຕາມແຜນງານ | 327,71 | - | - | 3.852,16 | 2.358,16 |
| ເງິນກູ້ຢືມໂຄງການ | 5.647,52 | 6.444,03 | 3.381,57 | 5.167,75 | 2.589,29 |
| ເງິນຊຳລະຕົ້ນທຶນເງິນກູ້ຢືມ | -2.285,66 | -3.427,58 | -4.127,93 | -5.868,69 | -5.691,83 |
| ເງິນຊ່ວຍເຫຼືອລ້າທີ່ບໍ່ແມ່ນໂຄງການ (ຈາກຍີ່ປຸ່ນ) | - | - | - | - | - |
| ກູ້ຢືມຕໍ່ສຸດທິ | 26,07 | 612,00 | 1.039,42 | 1.069,04 | 1.611,95 |

**ໝາຍເຫດ:** ນັບແຕ່ປີ 2017, ການເກັບກຳສັງລວມຂໍ້ມູນພາກງົບປະມານ ໄດ້ປັບປຸງຮູບແບບການລາຍງານ ຈາກລະບົບການລາຍງານແບບສົກປີງົບປະມານ ມາເປັນລະບົບການລາຍງານແບບປີປະຕິທິນ.

P ໝາຍເຖິງຕົວເລກເບື້ອງຕົ້ນ

R ໝາຍເຖິງຕົວເລກປັບປຸງໃໝ່

**ແຫຼ່ງຂໍ້ມູນ:** ກະຊວງການເງິນ.

## ຕາຕະລາງທີ 6. ລາຍຮັບງົບປະມານ )ຕື້ກີບ(

| ລາຍການ | 2017 | 2018 | 2019 | 2020 | 2021)P( |
|---|---|---|---|---|---|
| **1. ລາຍຮັບພາສີ-ອາກອນ** | **16.918,44** | **17.032,24** | **17.747,09** | **15.764,60** | **18.523,67** |
| ອາກອນກຳໄລ | 1.979,66 | 2.073,34 | 2.209,25 | 1.727,75 | 2.733,25 |
| ອາກອນລາຍໄດ້ | 1.602,58 | 1.619,01 | 1.646,45 | 1.450,88 | 1.493,67 |
| ອາກອນທີ່ດິນ | 113,15 | 188,12 | 201,32 | 188,37 | 169,21 |
| ຄ່າຈົດທະບຽນທຸລະກິດ | - | - | - | - | - |
| ອາກອນຕໍ່າສຸດ | - | - | - | - | - |
| ອາກອນຕົວເລກທຸລະກິດ | - | - | - | - | - |
| ອາກອນມູນຄ່າເພີ່ມ | 4.934,30 | 5.201,47 | 5.412,97 | 4.720,51 | 5.709,16 |
